## ສາລະບານ

I. ອັກສອນຫຍໍ້ .......... 2

II. ຈຸດປະສົງ .......... 3

III. ແຜນວຽກຂອງ ສປປ ລາວ ສໍາລັບປີ 2017 ເພື່ອຈັດຕັ້ງປະຕິບັດແຜນງານປະຊາຄົມເສດຖະກິດອາຊຽນ 2025 .......... 4

A1. ການຄ້າດ້ານສິນຄ້າ .......... 4

A2. ການຄ້າດ້ານບໍລິການ .......... 10

C7. ຂະແໜງການຮັກສາສຸຂະພາບ .......... 12

A3. ສະພາບແວດລ້ອມການລົງທຶນ .......... 14

A4. ການເຊື່ອມໂຍງທາງດ້ານການເງິນ, ການເຂົ້າເຖິງການບໍລິການທາງດ້ານການເງິນ ແລະ ສະຖຽນລະພາບທາງດ້ານການເງິນ .......... 16

D1. ເສີມສ້າງບົດບາດຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) .......... 21

IV. ກົນໄກການລາຍງານ ແລະ ການປະເມີນຜົນ .......... 26

# I. ອັກສອນຫຍໍ້

| | |
|---|---|
| ກຂອ | ກົມການນຳເຂົ້າ ແລະ ສົ່ງອອກ |
| ກງ | ກະຊວງການເງິນ |
| ກສຄ | ກົມສົ່ງເສີມການຄ້າ |
| ກສວ | ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ |
| ກນຄຕ | ກົມນະໂຍບາຍການຄ້າຕ່າງປະເທດ |
| ກປປ | ກົມປົ່ນປົວ |
| ກພສ | ກົມພາສີ, ກະຊວງການເງິນ |
| ກມວ | ກົມມາດຕະຖານ ແລະ ວັດແທກ |
| ກອຢ | ກົມອາຫານ ແລະ ຢາ |
| ກອຫ | ກົມອຸດສາຫະກຳ ແລະ ຫັດຖະກຳ |
| ສຄອ | ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ |
| ທຫລ | ທະນາຄານແຫ່ງ ສປປ ລາວ |
| ລທ | ກົມສົ່ງເສີມການລົງທຶນ |

## II. ຈຸດປະສົງ

ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກຳ ແລະ ການຄ້າ ໃນນາມເປັນຈຸດປະສານງານວຽກງານການເຊື່ອມໂຍງເສດຖະກິດອາຊຽນຂອງ ສປປ ລາວ ໄດ້ຮ່ວມກັບບັນດາຂະແໜງການທີ່ປິ່ນອ້ອມເສົາຄ້ຳເສດຖະກິດ ສ້າງ “ແຜນວຽກຂອງ ສປປ ລາວ ສຳລັບປີ 2017 ເພື່ອຈັດຕັ້ງປະຕິບັດແຜນງານປະຊາຄົມເສດຖະກິດອາຊຽນ 2025” ເພື່ອຜັນຂະຫຍາຍແຜນປະຕິບັດງານປະຊາຄົມເສດຖະກິດອາຊຽນ 2016-2025 ທີ່ໄດ້ຖືກຮັບຮອງໃນກອງປະຊຸມລັດຖະມົນຕີເສດຖະກິດອາຊຽນຄັ້ງທີ 48 ປີ 2016 ທີ່ ສປປ ລາວ. ແຜນວຽກດັ່ງກ່າວນີ້ ຈະເປັນຄູ່ມືນຳໃຊ້ເຂົ້າໃນການປຶກສາຫາລື, ຕິດຕາມ ແລະ ທົບທວນຄືນການຈັດຕັ້ງປະຕິບັດບັນດາມາດຕະການຕ່າງໆ ໃນໄລຍະເວລາ 1 ປີ ຂອງແຕ່ລະຂະແໜງການ ເພື່ອສະດວກໃນການຕິດຕາມ ແລະ ປະເມີນຄວາມຄືບໜ້າຂອງແຕ່ລະວຽກງານ.

# III. ແຜນວຽກຂອງ ສປປ ລາວ ສຳລັບປີ 2017 ເພື່ອຈັດຕັ້ງປະຕິບັດແຜນງານ ປະຊາຄົມເສດຖະກິດອາຊຽນ 2025

## A1. ການຄ້າດ້ານສິນຄ້າ

| *A1.1. ເສີມສ້າງການຈັດຕັ້ງປະຕິບັດສັນຍາການຄ້າດ້ານສິນຄ້າອາຊຽນ ຫຼື ATIGA* | | | |
|---|---|---|---|
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານ ຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 1) ປະເມີນປະສິດທິພາບຂອງສັນຍາການຄ້າດ້ານສິນຄ້າອາຊຽນ (ATIGA) ໃນການສົ່ງເສີມການຄ້າພາຍໃນອາຊຽນ | 1. ທົບທວນຄືນບາງເນື້ອໃນຂອງສັນຍາການຄ້າດ້ານສິນຄ້າອາຊຽນເພື່ອໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງອາຊຽນ | ກນຄຕ | ບົດລາຍງານ |
| | 2. ສຶກສາລາຍການສິນຄ້າສົ່ງອອກທີ່ເປັນທ່າແຮງທີ່ຕິດພັນກັບລະບຽບສະເພາະຜະລິດຕະພັນ (PSRs) ແລະ ມາດຕະການທາງການຄ້າທີ່ບໍ່ແມ່ນພາສີ (NTMs) | ກນຄຕ | ບົດສຶກສາ |
| | 3. ສຳເລັດການໂອນຖ່າຍລະຫັດອັດຕາພາສີຈາກປີ 2012 ເປັນປີ 2017 ແຕ່ຕ້ອງດຳເນີນຂັ້ນຕອນພາຍໃນເພື່ອຮັບຮອງເອົາຢ່າງເປັນທາງການ | ກນຄຕ | ສາລະບານອັດຕາພາສີປີ 2017 |
| 2) ຮັບຮອງບັນດາມາດຕະການເພື່ອເພີ່ມການນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ D | 4. ປັບປຸງຮູບແບບການເກັບກຳຂໍ້ມູນກ່ຽວກັບການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ເພື່ອແລກປ່ຽນກັບກອງເລຂາອາຊຽນ | ກຂອ | ແບບຟອມທີ່ເປັນເອກະພາບທົ່ວປະເທດ ແລະ ສອດຄ່ອງກັບແບບຟອມຂອງກອງເລຂາອາຊຽນ (E-CO Form D) |
| | 5. ພັດທະນາໂປຣແກຣມຄອມພິວເຕີໃຊ້ເພື່ອການວິເຄາະຂໍ້ມູນທາງການຄ້າ | ກຂອ | - ມີຄວາມທັນສະໄໝຫຼາຍຂຶ້ນ ຖານບັນຈຸຂໍ້ມູນທີ່ໃຫຍ່ກວ່າເກົ່າ<br>- ວິເຄາະຂໍ້ມູນໄດ້ຫຼາກຫຼາຍ ແລະ ເລິກເຊິ່ງຂຶ້ນກວ່າເກົ່າ ຕົວເລກທີ່ຊັດເຈນ ແລະ ຮັບປະກັນຄວາມຖືກຕ້ອງຫຼາຍຂຶ້ນກວ່າເກົ່າ |
| | 6. ສ້າງຄວາມຮັບຮູ້ໃຫ້ແກ່ພາກເອກະຊົນໃນການນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມD | ກຂອ | ຈັດເຜີຍແຜ່ໃນຂອບເຂດທົ່ວປະເທດ |
| | 7. ເຊື່ອມຕໍ່ລະບົບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກຂອງການບໍລິການປະຕູດຽວແຫ່ງຊາດ ແລະ ການບໍລິການປະຕູດຽວອາຊຽນກັບລະບົບທີ່ມີຢູ່ຂອງພາກລັດທີ່ກ່ຽວຂ້ອງ | ກຂອ | ສຳເລັດການເຊື່ອມຕໍ່ ຫຼື ມີລະບົບການບໍລິການປະຕູດຽວ (National Single Window) |
| | 8. ເຜີຍແຜ່ຜົນປະໂຫຍດຂອງການນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າຟອມ D ພາຍໃຕ້ລະບົບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກທົ່ວປະເທດ | ກຂອ | ຈັດເຜີຍແຜ່ໃຫ້ແກ່ພາກລັດ ແລະ ພາກທຸລະກິດ |

| | | | |
|---|---|---|---|
| 3) ສ້າງແຜນຕິດຕາມການປະຕິບັດຕາມຂໍ້ກຳນົດການແຈ້ງມາດຕະການຂອງບັນດາປະເທດສະມາຊິກອາຊຽນ | 9. ສ້າງຄວາມເຂົ້າໃຈໃຫ້ຜູ້ປະກອບການ ແລະ ພາກສ່ວນກ່ຽວຂ້ອງກ່ຽວກັບວຽກງານມາດຕະການສຸຂານະໄມພືດ ແລະ ສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າ | ກນຄຕ | ຈັດກອງປະຊຸມສຳມະນາ/ເຜີຍແຜ່ໃຫ້ແກ່ພາກລັດ ແລະ ພາກທຸລະກິດ |
| 4) ພັດທະນາບັນດາຂັ້ນຕອນເພື່ອຊອກຫາແນວທາງໃນການແກ້ໄຂບັນຫາມາດຕະການທາງການຄ້າທີ່ບໍ່ແມ່ນພາສີ ຢ່າງມີປະສິດທິພາບ | 10. ປ້ອນຂໍ້ມູນ (Upload) ຂັ້ນຕອນທີ່ກ່ຽວຂ້ອງກັບມາດຕະການທາງການຄ້າທີ່ບໍ່ແມ່ນພາສີທີ່ຖືກກຳນົດ ເຂົ້າໃນສູນຂໍ້ມູນຂ່າວສານທາງການຄ້າຂອງ ສປປ ລາວ ຫຼື www.laotradeportal.gov.la | ກຂອ | ອັບໂຫຼດບັນດາຂັ້ນຕອນ ແລະ ມາດຕະການໃໝ່ເຂົ້າໃນ www.laotradeportal.gov.la |
| | 11. ພັດທະນາ ແລະ ເຜີຍແຜ່ປຶ້ມແນະນຳກ່ຽວກັບມາດຕະການທາງການຄ້າທີ່ບໍ່ແມ່ນພາສີ | ກຂອ | ປຶ້ມແນະນຳ ແລະ ຈັດເຜີຍແຜ່ໃຫ້ແກ່ພາກລັດ ແລະ ພາກທຸລະກິດ |
| 5) ທົບທວນບັນດາມາດຕະການທາງການຄ້າທີ່ບໍ່ແມ່ນພາສີ ແລະ ອຳນວຍຄວາມສະດວກໃນການແລກປ່ຽນຄວາມຄິດເຫັນກ່ຽວກັບການລຶບລ້າງມາດຕະການທາງການຄ້າທີ່ບໍ່ແມ່ນພາສີ | 12. ສືບຕໍ່ຈັດປະເພດມາດຕະການທາງການຄ້າທີ່ບໍ່ແມ່ນພາສີໃນສູນຂໍ້ມູນທາງການຄ້າຂອງ ສປປ ລາວ ໃຫ້ທັນກັບສະພາບການ | ກຂອ | ຈັດປະເພດ NTMs ຈາກນິຕິກຳໃໝ່ |
| 6) ເສີມສ້າງຄວາມເຂັ້ມແຂງໃນການມີສ່ວນຮ່ວມຂອງບັນດາສະຖາບັນກັບພາກທຸລະກິດ ແລະ ຜູ້ທີ່ມີສ່ວນຮ່ວມອື່ນໆເພື່ອຮັບມືກັບບັນຫາມາດຕະການທາງການຄ້າທີ່ບໍ່ແມ່ນພາສີ ຢ່າງມີປະສິດທິພາບ | 13. ສ້າງກົນໄກການມີສ່ວນຮ່ວມຂອງພາກທຸລະກິດໃຫ້ຫຼາຍຂຶ້ນ ໂດຍຜ່ານກອງເລຂາອຳນວຍຄວາມສະດວກທາງການຄ້າ ແລະ ໜ່ວຍງານມາດຕະການທາງການຄ້າທີ່ບໍ່ແມ່ນພາສີ | ກຂອ | ຈັດກອງປະຊຸມພົບປະພາກທຸລະກິດ |
| 7) ກວດສອບ ແລະ ປັບປຸງຖານຂໍ້ມູນມາດຕະການທາງການຄ້າທີ່ບໍ່ແມ່ນພາສີອາຊຽນ ເພື່ອຮັບປະກັນວ່າຖານຂໍ້ມູນມາດຕະການທາງການຄ້າທີ່ບໍ່ແມ່ນພາສີອາຊຽນສອດຄ່ອງກັບສູນຂໍ້ມູນທາງການຄ້າແຫ່ງຊາດ (NTR) ແລະ ສູນຂໍ້ມູນທາງການຄ້າອາຊຽນ (ATR) | 14. ປັບປຸງສູນຂໍ້ມູນທາງການຄ້າແຫ່ງຊາດ (NTR) ທີ່ບັນຈຸລາຍການມາດຕະການທາງການຄ້າທີ່ບໍ່ແມ່ນພາສີ ເພື່ອຮັບປະກັນໃຫ້ສອດຄ່ອງກັບສູນຂໍ້ມູນທາງການຄ້າອາຊຽນ (ATR) | ກຂອ | ອັບເດດຂໍ້ມູນໃນ NTR ເພື່ອໃຫ້ສອດຄ່ອງກັບລະບົບ ATR |
| 8) ຫຼຸດຜ່ອນຂັ້ນຕອນ ແລະ ຂໍ້ກຳນົດສຳລັບການອອກໃບຢັ້ງຢືນ, ໃບອະນຸຍາດ ແລະ ໃບທະບຽນໃນການນຳເຂົ້າ-ສົ່ງອອກ | 15. ປະເມີນຜົນກະທົບດ້ານລະບຽບການ (RIA) ສຳລັບມາດຕະການທາງການຄ້າທີ່ບໍ່ແມ່ນພາສີທີ່ຖືກກຳນົດໂດຍຂະແໜງການທີ່ກ່ຽວຂ້ອງຂອງພາກລັດ ເພື່ອຊອກຫາວິທີໃນການປັບປຸງ ແລະ ລຶບລ້າງມາດຕະການດັ່ງກ່າວ | ກຂອ | ສຳເລັດປຶ້ມປະເມີນຜົນກະທົບຂອງຢ່າງໜ້ອຍ 10 ລາຍການສິນຄ້າ, ສະເໜີແນວທາງປັບປຸງຂັ້ນຂອດທີ່ບໍ່ຈຳເປັນ |
| *A1.2. ຫຼຸດຜ່ອນຄວາມຊັບຊ້ອນ ແລະ ເສີມສ້າງການຈັດຕັ້ງປະຕິບັດລະບຽບແຫຼ່ງກຳເນີດສິນຄ້າ ຫຼື ROO* | | | |
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 9) ທົບທວນບັນດາລະບຽບການສະເພາະຜະລິດຕະພັນ (PSRs) | 16. ວິເຄາະລາຍການສິນຄ້າໃນ Negative List ມາເປັນ Positive List ທີ່ມີລະບຽບສະເພາະ | ກຂອ | ປຶ້ມລາຍງານ |

| | | | |
|---|---|---|---|
| ທີ່ກ່ຽວຂ້ອງກັບສັນຍາການຄ້າເສລີອາຊຽນກັບຄູ່ຮ່ວມເຈລະຈາ ແລະ ໃນມຸມມອງຂອງການສົ່ງເສີມຕ່ອງໂສ້ມູນຄ່າເພີ່ມຂອງພາກພື້ນ ແລະ ຂອງໂລກ | ຜະລິດຕະພັນ (PSRs) ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ສົ່ງອອກ | | |
| | 17. ໂອນຖ່າຍລະຫັດຂອງລະບຽບສະເພາະຜະລິດຕະພັນ (PSRs) ໃຫ້ໄປຕາມສາລະບານລະຫັດອັດຕາພາສີ 2017 | ກຂອ | ສຳເລັດການໂອນຖ່າຍ |
| 10) ສ້າງຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ແລະ ຮັບປະກັນການປັບປຸງຢ່າງຕໍ່ເນື່ອງ | 18. ວິເຄາະຈັດຕັ້ງປະຕິບັດຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (OCP) ຂອງອາຊຽນ ແລະ ຂອງຄູ່ເຈລະຈາ | ກຂອ | ບົດລາຍງານ |
| 11) ສະໜັບສະໜູນ ແລະ ສົ່ງເສີມການມີສ່ວນຮ່ວມຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ໃນການຄ້າພາກພື້ນ ໂດຍຜ່ານການນຳໃຊ້ລະບຽບແຫຼ່ງກຳເນີດສິນຄ້າຢ່າງເພີ່ມຂຶ້ນ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ (ATIGA) | 19. ວິເຄາະ ແລະ ປະເມີນປະສິດທິພາບການນຳໃຊ້ລະບຽບແຫຼ່ງກຳເນີດສິນຄ້າຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) | ກຂອ | ບົດລາຍງານ |
| | 20. ສ້າງຄວາມເຂົ້າໃຈກ່ຽວກັບການນຳໃຊ້ລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ (ATIGA) | ກຂອ | ຈັດເຜີຍແຜ່ໃຫ້ແກ່ພາກລັດ ແລະ ພາກທຸລະກິດ |
| | 21. ສ້າງບົດສຶກສາຄົ້ນຄວ້າເພື່ອໄຈ້ແຍກຊ່ອງວ່າງລະຫວ່າງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ໃນຂະນະທີ່ນຳໃຊ້ລະບຽບແຫຼ່ງກຳເນີດສິນຄ້າພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ (ATIGA) | ກຂອ | ບົດສຶກສາ |

***A1.3. ເລັ່ງລັດ ແລະ ລົງເລິກການຈັດຕັ້ງປະຕິບັດມາດຕະການອຳນວຍຄວາມສະດວກທາງການຄ້າ***

| ແຜນກິດຈະກຳລວມຂອງອາຊຽນ | ແຜນວຽກຂອງ ສປປ ລາວ | ໜ່ວຍງານຮັບຜິດຊອບຫຼັກ | ຄາດຄະເນຜົນໄດ້ຮັບ |
|---|---|---|---|
| 12) ຊຸກຍູ້ສົ່ງເສີມການປະຕິບັດຕາມລະບຽບຫຼັກການທີ່ກ່ຽວຂ້ອງກັບຂໍ້ກຳນົດການອຳນວຍຄວາມສະດວກທາງການຄ້າພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ | 22. ສ້າງຄວາມຮັບຮູ້ກ່ຽວກັບການອຳນວຍຄວາມສະດວກທາງການຄ້າທີ່ກ່ຽວຂ້ອງ | ກຂອ | ຈັດເຜີຍແຜ່ໃຫ້ແກ່ພາກລັດ ແລະ ພາກທຸລະກິດ |
| | 23. ທົບທວນແຜນຍຸດທະສາດອຳນວຍຄວາມສະດວກທາງການຄ້າທີ່ມີຢູ່ (2011-2015) ແລະ ຮ່າງແຜນການອຳນວຍຄວາມສະດວກທາງການຄ້າສະບັບໃໝ່ (2017-2022) | ກຂອ | ຮັບຮອງບົດທົບທວນແຜນຍຸດທະສາດອຳນວຍຄວາມສະດວກທາງການຄ້າ 2011-2015 ແລະ ແຜນດຳເນີນງານຍຸດທະສາດການອຳນວຍຄວາມສະດວກທາງການຄ້າ 2017-2022 |
| 13) ການດຳເນີນງານຢ່າງເຕັມຮູບແບບຂອງສູນຂໍ້ມູນທາງການຄ້າອາຊຽນ (ATR)/ສູນຂໍ້ມູນທາງການຄ້າແຫ່ງຊາດ (NTR) | 24. ເຜີຍແຜ່ກ່ຽວກັບສູນຂໍ້ມູນທາງການຄ້າແຫ່ງຊາດ (NTR) ແລະ ສູນຂໍ້ມູນທາງການຄ້າອາຊຽນ (ATR) ໃຫ້ແກ່ພາກລັດ ແລະ ພາກທຸລະກິດ | ກຂອ | ຈັດເຜີຍແຜ່ໃຫ້ແກ່ພາກລັດ ແລະ ພາກທຸລະກິດ |
| 14) ຈັດຕັ້ງປະຕິບັດລະບົບໃຫ້ຄຳປຶກສາດ້ານການຄ້າດ້ານສິນຄ້າ, ການຄ້າດ້ານບໍລິການ ແລະ ການລົງທຶນອາຊຽນ (ASSIST) ຢ່າງ | 25. ເຜີຍແຜ່ລະບົບໃຫ້ຄຳປຶກສາດ້ານການຄ້າດ້ານສິນຄ້າ, ການຄ້າດ້ານບໍລິການ ແລະ ການລົງທຶນອາຊຽນ (ASSIST) ເພື່ອສ້າງຄວາມຮັບຮູ້ໃຫ້ແກ່ພາກເອກະຊົນກ່ຽວກັບແນວຄວາມຄິດ | ກນຄຕ | ຈັດເຜີຍແຜ່ໃຫ້ແກ່ພາກລັດ ແລະ ພາກທຸລະກິດ |

| | | | |
|---|---|---|---|
| ມີປະສິດທິພາບ. | ແລະ ການນຳໃຊ້ຜົນປະໂຫຍດຈາກລະບົບດັ່ງກ່າວ. | | |
| 15) ຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງອາຊຽນ (ASEAN Wide Self-Certification) | 26. ເຜີຍແຜ່ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງອາຊຽນ | ກຂອ | ຈັດເຜີຍແຜ່ໃຫ້ແກ່ພາກລັດ ແລະ ພາກທຸລະກິດ |
| | 27. ປຶກສາຫາລືກັບພາກສ່ວນກ່ຽວຂ້ອງໃນການຮວມຕົວຂອງ ASEAN Wide Self-Certification | ກຂອ | ຈັດກອງປະຊຸມພົບປະກັບຂະແໜງການກ່ຽວຂ້ອງທັງພາກລັດ ແລະ ພາກທຸລະກິດ |
| 16) ຊຸກຍູ້ສົ່ງເສີມການອຳນວຍຄວາມສະດວກທາງການຄ້າໂດຍການຫຼຸດຜ່ອນ ແລະ ສ້າງຄວາມສະດວກໃຫ້ແກ່ຂັ້ນຕອນຕາມດ່ານຊາຍແດນເຊັ່ນ ຜ່ານການຈັດຕັ້ງປະຕິບັດລະບົບການບໍລິການປະຕູດຽວອາຊຽນເພື່ອອຳນວຍຄວາມສະດວກໃນການແລກປ່ຽນບັນດາເອກະສານລະຫວ່າງຊາຍແດນ ພ້ອມທັງສົ່ງເສີມການຈັດຕັ້ງປະຕິບັດສັນຍາການອຳນວຍຄວາມສະດວກທາງການຄ້າຂອງອົງການການຄ້າໂລກ | 28. ທົດລອງການນຳໃຊ້ລະບົບການບໍລິການປະຕູດຽວແຫ່ງຊາດ (National Single Window) ແລະ ພະຍາຍາມເຊື່ອມໂຍງກັບລະບົບການບໍລິການປະຕູດຽວອາຊຽນ | ກພສ | ບົດລາຍງານຜົນການທົດລອງນຳໃຊ້ລະບົບດັ່ງກ່າວ |
| 17) ເສີມສ້າງຂອບວຽກການຮ່ວມມືໃນການພັດທະນາເສີມສ້າງຂອບວຽກການຮ່ວມມືໃນການພັດທະນາມາດຕະຖານຕາມຄູ່ມືອາຊຽນກ່ຽວກັບການເຊື່ອມໂຍງດ້ານມາດຕະຖານ (ASEAN Guidelines for Harmonization of Standards) | 29. ຄົ້ນຄວ້າ, ສ້າງ, ປັບປຸງ ແລະ ຮັບຮອງມາດຕະຖານຂອງລາວໃຫ້ມີຄວາມສອດຄ່ອງກັບມາດຕະຖານແຕ່ລະຂົງເຂດຂອງອາຊຽນ | ກມວ | ບົດລາຍງານຜົນການທົດລອງນຳໃຊ້ລະບົບດັ່ງກ່າວ |
| | 30. ພິຈາລະນາຮັບຮອງມາດຕະຖານສາກົນເປັນມາດຕະຖານແຫ່ງຊາດເພື່ອເຊື່ອມໂຍງກັບມາດຕະຖານອາຊຽນ ໂດຍສະເພາະ11ຂົງເຂດບຸລິມະສິດ | ກມວ | ບົດສະເໜີເພື່ອຮັບຮອງບາງມາດຕະຖານຂອງອາຊຽນມາເປັນມາດຕະຖານແຫ່ງຊາດ |
| 18) ດຳເນີນການເຮັດວຽກຮ່ວມກັນລະຫວ່າງຂະແໜງການກ່ຽວຂ້ອງຂອງອາຊຽນທາງດ້ານນິຕິກຳ ແລະ ການວັດແທກທາງດ້ານວິທະຍາສາດ | 31. ສຳລັບວຽກງານວັດແທກທາງດ້ານກົດໝາຍ:<br>- ສ້າງຂໍ້ກຳນົດວ່າດ້ວຍການຄຸ້ມຄອງຊິງຊັ່ງລົດບັນທຸກ<br>- ປັບປຸງຂໍ້ກຳນົດວ່າດ້ວຍການຄຸ້ມຄອງສິນຄ້າຫຸ້ມຫໍ່<br>- ສ້າງຂໍ້ກຳນົດວ່າດ້ວຍການຄຸ້ມຄອງເຄື່ອງວັດແທກອັດຕາການໄຫຼຂອງສາງນ້ຳມັນ.<br>- ສ້າງຂໍ້ກຳນົດວ່າດ້ວຍການຄຸ້ມຄອງຊິງຊັ່ງຕາມທ້ອງຕະຫຼາດ<br>- ສ້າງຂໍ້ກຳນົດວ່າດ້ວຍການຄຸ້ມຄອງໝໍ້ແທກນ້ຳປະປາ<br>- ສ້າງຂໍ້ກຳນົດວ່າດ້ວຍການຄຸ້ມຄອງຄວາມດັນ.<br>- ສ້າງຂໍ້ກຳນົດວ່າດ້ວຍການຄຸ້ມຄອງອຸນຫະພູມ | ກມວ | ບົດສະເໜີເພື່ອຮັບຮອງບາງມາດຕະຖານຂອງອາຊຽນມາເປັນມາດຕະຖານແຫ່ງຊາດໂດຍສະເພາະໃນ 11 ຂົງເຂດບຸລິມະສິດ |
| | 32. ສຳລັບວຽກງານວັດແທກທາງດ້ານວິທະຍາສາດ:<br>- ສະໝັກເຂົ້າເປັນສະມາຊິກຂອງ APMP | ກມວ | ເປັນສະມາຊິກຂອງ APMP |

| | | | |
|---|---|---|---|
| | - ຝຶກອົບຮົມກ່ຽວກັບການສອບທຽບເຄື່ອງມື ອຸປະກອນວັດແທກຂອງຫ້ອງທົດລອງໜ່ວຍ ງານວິຊາການວຽກງານວັດແທກອາຊຽນ<br>- ການວັດປຽບທຽບລະຫວ່າງຫ້ອງທົດລອງກັບ ບັນດາປະເທດອາຊຽນໃນຂົງເຂດຫ້ອງທົດ ລອງນໍ້າໜັກ, ອຸນຫະພູມ, ໄຟຟ້າ,ຄວາມດັນ ແລະ ຫ້ອງທົດລອງບໍລິມາດ | | |
| 19) ປັບປຸງວຽກງານໃນການຮ່ວມມື ຕາມຄູ່ມືອາຊຽນກ່ຽວກັບການປະ ເມີນຄວາມສອດຄ່ອງ ແລະ ການ ຮັບຮອງ (ASEAN Guideline on Accreditation and Conformity Assessment) | 33. ສ້າງລະບຽບການສໍາລັບການຮັບຮອງຫ້ອງທົດ ລອງ ແລະ ການຢັ້ງຢືນຄຸນນະພາບ | ກມວ | ມີລະບຽບເພື່ອຮັບຮອງ |
| 20) ພັດທະນາແນວທາງທົ່ວໄປສໍາລັບ ຂະແໜງການເພື່ອສ້າງໃຫ້ເປັນ ລະບົບດຽວກັນທາງດ້ານລະບຽບ ຫຼັກການຂະຫຍາຍຂອບເຂດຄູ່ມື ກ່ຽວກັບການພັດທະນາສັນຍາ ການຮັບຮູ້ຊຶ່ງກັນ ແລະ ກັນຂອງ ອາຊຽນ (MRA) ທີ່ໄດ້ຮັບການ ພັດທະນາມາກ່ອນໜ້ານີ້ | 34. ສ້າງລະບຽບການຄຸ້ມຄອງເຄື່ອງອຸປະກອນ ໄຟຟ້າ-ເອເລັກໂຕຣນິກ (EEE) | ກມວ | ມີລະບຽບເພື່ອຮັບຮອງ |
| | 35. ສ້າງ MRA ຂອງວຽກງານ EEE ຕໍ່ກັບອາຊຽນ | ກມວ | ສໍາເລັດການສ້າງ MRA ດັ່ງກ່າວ |
| | 36. ທົບທວນຄືນ ແລະ ດັດແກ້ Framework on STRACAP | ກມວ | ບົດລາຍງານ |
| 21) ເສີມຂະຫຍາຍການຈັດຕັ້ງ ປະຕິບັດລະບົບເຕືອນໄພໃນພາກ ພື້ນ ແລະ ຮັບຮອງເອົາວິທີການປະ ເມີນຄວາມສ່ຽງ ແລະ ລະບົບດູ ແລຕະຫຼາດໃນບັນດາປະເທດ ສະມາຊິກອາຊຽນ | 37. ສ້າງຕັ້ງຫ້ອງທົດລອງສໍາລັບເຄື່ອງອຸປະກອນ ໄຟຟ້າ-ເອເລັກໂຕຣນິກ | ກມວ | ມີນິຕິກໍາຮັບຮອງ |
| | 38. ຈັດຕັ້ງປະຕິບັດການນໍາໃຊ້ປຶ້ມຄູ່ມືຂອງ ສັນຍາ ວ່າດ້ວຍການປັບລະບົບ ແລະ ການຄວບຄຸມ ອຸປະກອນໄຟຟ້າ ແລະ ເອເລັກໂຕຣນິກຂອງ ອາຊຽນ ຫຼື Agreement on the ASEAN Harmonized Electrical and Electronic Equipment Regulatory Regime (AHEEERR) | ກມວ | ບົດຄົ້ນຄວ້າເພື່ອສະເໜີ ຮັບຮອງເອົາປຶ້ມຄູ່ມື |
| 22) ທົບທວນຄືນ ແລະ ເພີ່ມທະວີ ການຈັດຕັ້ງປະຕິບັດບັນດາຂໍ້ລິ ເລີ່ມການເຊື່ອມໂຍງຕະຫຼາດທີ່ ພວມດໍາເນີນການຢູ່ ຊຶ່ງກວມເອົາ ສັນຍາການຮັບຮູ້ຊຶ່ງກັນ ແລະ ກັນ ຂອງວຽກງານດ້ານມາດຕະຖານ ແລະ ຄຸນນະພາບ (ACCSQ) ທີ່ມີຢູ່ ແລະ ລະບອບຄຸ້ມຄອງທີ່ ສອດຄ່ອງກັນ | 39. ສ້າງຄວາມເຂົ້າໃຈກ່ຽວກັບວຽກຂອງຄະນະ ກໍາມະການທີ່ປຶກສາອາຊຽນດ້ານມາດຕະຖານ ແລະ ຄຸນນະພາບ (ACCSQ) ແລະ ແຜນ ງານອື່ນໆທີ່ກ່ຽວຂ້ອງ | ກມວ | ຈັດກອງປະຊຸມເຜີຍແຜ່ໃຫ້ແກ່ ຂະແໜງການກ່ຽວຂ້ອງ |
| 23) ຈັດຕັ້ງປະຕິບັດຂໍ້ລິເລີ່ມການອໍາ ນວຍຄວາມສະດວກທາງການຄ້າ ຂອງວຽກງານມາດຕະຖານ, ລະບຽບການທາງດ້ານເຕັກນິກ ແລະ ຂັ້ນຕອນການປະເມີນຄວາມ | 40. ທົບທວນຄືນ ແລະ ປັບປຸງລະບຽບການທີ່ມີ ແລ້ວທີ່ກ່ຽວຂ້ອງກັບບັນດາມາດຕະການອໍາ ນວຍຄວາມສະດວກທາງການຄ້າຕໍ່ກັບວຽກງານ ໜ່ວຍງານມາດຕະຖານທາງດ້ານລະບຽບການ, ເຕັກນິກ ແລະ ຂັ້ນຕອນການປະເມີນຄວາມ | ກມວ | ບົດລາຍງານ |

| | | | |
|---|---|---|---|
| ສອດຄ່ອງ (STRACAP) ຢູ່ໃນພາກພື້ນທີ່ມີຄວາມເຂັ້ມງວດຂຶ້ນໃນບັນດາຂົງເຂດທີ່ມີຢູ່ ແລະ ຂົງເຂດໃໝ່ ລວມທັງການຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງ MSMEs | ສອດຄ່ອງ (STRACAP) ໃຫ້ດີຂຶ້ນ ແລະ ມີຄວາມສອດຄ່ອງກັບການປະຕິບັດຕົວຈິງ | | |
| 24) ເສີມຂະຫຍາຍການເຂົ້າຮ່ວມ ແລະ ການປະສານງານຢ່າງມີປະສິດທິພາບໃນຕໍາແໜ່ງລະດັບພາກພື້ນໃນບັນດາອົງການມາດຕະຖານສາກົນທີ່ກໍານົດໄວ້ | 41. ເຂົ້າຮ່ວມການເຄື່ອນໄຫວວຽກງານມາດຕະຖານກັບຄະນະກໍາມະການເຕັກນິກສາກົນ | ກມວ | ເຂົ້າຮ່ວມເຄື່ອນໄຫວວຽກງານດັ່ງກ່າວ |
| 25) ຮັບຮອງເອົາແນວທາງຮ່ວມກັນໃນການກໍານົດ ແລະ ມີສ່ວນຮ່ວມໃນອົງການຈັດຕັ້ງສາກົນ ແລະ ໜ່ວຍງານອື່ນໆໃນວຽກງານມາດຕະຖານ, ປະເມີນຄວາມສອດຄ່ອງ, ວັດແທກ ແລະ ລະບຽບການທາງເຕັກນິກ | 42. ຄົ້ນຄວ້າ, ປັບປຸງ ແລະ ຊຸກຍູ້ການປະສານງານຂອງໜ່ວຍງານມາດຕະຖານ, ປະເມີນຄວາມສອດຄ່ອງ, ວັດແທກ, ລະບຽບການເຕັກນິກ ແລະ ໜ່ວຍງານອື່ນໆທີ່ກ່ຽວຂ້ອງໃຫ້ຮ່ວມມືກັນຈັດຕັ້ງປະຕິບັດວຽກງານດັ່ງກ່າວ | ກມວ | ບົດລາຍງານ |
| 26) ສ້າງວິທີການຮ່ວມ ເພື່ອຈັດຕັ້ງປະຕິບັດກິດຈະກໍາໃນການປະເມີນຄວາມສອດຄ່ອງເພື່ອຊຸກຍູ້ລະບຽບການທາງດ້ານເຕັກນິກ | 43. ສ້າງລະບຽບການກ່ຽວກັບການຮັບຮູ້ ແລະ ການຍອມຮັບຜົນຂອງການປະເມີນຄວາມສອດຄ່ອງຊຶ່ງກັນ ແລະ ກັນໃນອາຊຽນ ພ້ອມທັງຈັດກອງປະຊຸມເຜີຍແຜ່ໂຄສະນາກ່ຽວກັບກິດຈະກໍາຂອງວຽກງານດັ່ງກ່າວ | ກມວ | ບົດລາຍງານຜົນຂອງການຄົ້ນຄວ້າ ແລະ ຈັດເຜີຍແຜ່ |
| 27) ຊຸກຍູ້ບັນດາຂໍ້ລິເລີ່ມກ່ຽວກັບມາດຕະຖານການສຶກສາສໍາລັບການພັດທະນາຄວາມຮູ້ ແລະ ທັກສະທີ່ຈໍາເປັນເພື່ອຕອບສະໜອງໂຄ່ງລ່າງພື້ນຖານທາງດ້ານມາດຕະຖານໃນອາຊຽນ ແລະ ປັບປຸງຊັບພະຍາກອນມະນຸດ ແລະ ຄວາມອາດສາມາດຂອງສະຖາບັນ ແລະ ການປະສານງານລະຫວ່າງປະເທດສະມາຊິກອາຊຽນ ແລະ ສົ່ງເສີມການແລກປ່ຽນຜູ້ຊ່ຽວຊານໃນຂົງເຂດມາດຕະຖານ, ປະເມີນຄວາມສອດຄ່ອງ, ວັດແທກ ແລະ ລະບຽບການທາງເຕັກນິກ | 44. ສ້າງເວັບໄຊຂອງ ສປປ ລາວ ກ່ຽວກັບວຽກງານຂອງໜ່ວຍງານມາດຕະຖານ, ລະບຽບທາງດ້ານເຕັກນິກ ແລະ ຂັ້ນຕອນການປະເມີນຄວາມສອດຄ່ອງ (STRACAP) | ກມວ | ມີເວັບໄຊ |

## A2. ການຄ້າດ້ານບໍລິການ

| A2.1. ທົບທວນຄືນບັນດາຂໍ້ໂຍະຍານ, ຄາດໝາຍ, ຂໍ້ຈຳກັດ ແລະ ຂະແໜງຍົກເວັ້ນ ທີ່ມີຢູ່ຕາມຄວາມເໝາະສົມ | | | |
|---|---|---|---|
| **ແຜນກິດຈະກໍາລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານ ຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 1) ປະເມີນປະສິດທິພາບຂອງບັນດາຂໍ້ໂຍະຍານ,ຂໍ້ຈຳກັດ, ຄາດໝາຍ ແລະ ຂະແໜງຍົກເວັ້ນພາຍໃຕ້ສັນຍາ AFAS ໃນສະພາບການຂອງສັນຍາການຄ້າດ້ານບໍລິການອາຊຽນ (ATISA) ເພື່ອປັບປຸງການເປີດເສລີຂະແໜງການຄ້າດ້ານບໍລິການພາຍໃນອາຊຽນ | 1. ຄົ້ນຄວ້າ ແລະ ພິຈາລະນາກົນໄກການປະເມີນເພື່ອກໍານົດຄາດໝາຍ,ຂໍ້ຈຳກັດ ແລະ ນະໂຍບາຍໂຍະຍານ ໃຫ້ແທດເໝາະກັບສະພາບການຕົວຈິງພາຍໃຕ້ສັນຍາວ່າດ້ວຍການຄ້າດ້ານບໍລິການອາຊຽນ (ATISA) ໃຫ້ຫຼາຍຂຶ້ນ | ລທ | ບົດລາຍງານການປະເມີນ |
| ***A2.2. ເສີມຂະຫຍາຍບັນດາກົນໄກຕ່າງໆເພື່ອເປັນການສົ່ງເສີມການລົງທຶນໂດຍກົງຂອງຕ່າງປະເທດ (FDI) ໃນບັນດາຂະແໜງການບໍລິການ ລວມທັງການມີສ່ວນຮ່ວມຂອງນັກລົງທຶນຕ່າງປະເທດໃນການສະໜັບສະໜູນບັນດາກິດຈະກໍາໃນຕ່ອງໂສ້ມູນຄ່າເພີ່ມຂອງໂລກ*** | | | |
| **ແຜນກິດຈະກໍາລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານ ຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 2) ສະພາບແວດລ້ອມທີ່ໜ້າດຶງດູດກວ່າເກົ່າໃຫ້ແກ່ການລົງທຶນທາງກົງ, ຫຼຸດຜ່ອນຄວາມຊັບຊ້ອນ ແລະ ເພີ່ມຄວາມຄ່ອງຕົວໃຫ້ບັນດາລະບຽບການພາຍໃນ ແລະ ຂັ້ນຕອນທີ່ກ່ຽວຂ້ອງກັບການລົງທຶນໃນຂະແໜງການບໍລິການ | 2. ຄົ້ນຄວ້າ ແລະ ເຈລະຈາບັນດາເນື້ອໃນຂອງມາດຕາທີ່ຢູ່ໃນສັນຍາດ້ານບໍລິການອາຊຽນ | ລທ | ຮັບຮອງເນື້ອໃນຮ່າງສັນຍາ |
| ***A2.3. ສຳຫຼວດບັນດາວິທີການທີ່ເປັນທາງເລືອກສຳລັບການເປີດເສລີດ້ານການຄ້າດ້ານບໍລິການເພີ່ມເຕີມ*** | | | |
| **ແຜນກິດຈະກໍາລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານ ຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 3) ສຳຫຼວດບັນດາວິທີການທີ່ເປັນທາງເລືອກເພື່ອເປີດເສລີການຄ້າດ້ານບໍລິການເພີ່ມເຕີມ | 3. ຄົ້ນຄວ້າກ່ຽວກັບຄວາມເປັນໄປໄດ້ໃນການສ້າງ Negative List ຕາມການຊີ້ນໍາຂອງລັດຖະມົນຕີເສດຖະກິດອາຊຽນ | ລທ | ຮ່າງຕາຕະລາງ Negative List |
| | 4. ສ້າງຄວາມເຂົ້າໃຈໃນການເຮັດ Negative List | ລທ | ຈັດຝຶກອົບຮົມ |
| ***A2.4. ສ້າງລະບຽບການທີ່ເປັນໄປໄດ້ກ່ຽວກັບລະບຽບກົດໝາຍພາຍໃນປະເທດເພື່ອຮັບປະກັນຄວາມສາມາດໃນການແຂ່ງຂັນຂອງບັນດາຂະແໜງການບໍລິການໂດຍຄຳນຶງເຖິງວັດຖຸປະສົງອື່ນໆທີ່ບໍ່ແມ່ນດ້ານເສດຖະກິດ ຫຼື ການພັດທະນາ ຫຼື ລະບຽບຫຼັກການ*** | | | |
| **ແຜນກິດຈະກໍາລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານ ຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 4) ສ້າງລະບຽບວິໄນກ່ຽວກັບລະບຽບການພາຍໃນບົນພື້ນຖານການດໍາ | 5. ຄົ້ນຄວ້າ, ປັບປຸງ ແລະ ສ້າງລະບຽບການທີ່ຕິດພັນກັບແຕ່ລະຂະແໜງການກ່ຽວຂ້ອງເພື່ອສະ | ລທ | ບົດລາຍງານ ແລະ ຂໍ້ສະເໜີ |

| ແຜນກິດຈະກຳລວມຂອງອາຊຽນ | ແຜນວຽກຂອງ ສປປ ລາວ | ໜ່ວຍງານຮັບຜິດຊອບຫຼັກ | ຄາດຄະເນຜົນໄດ້ຮັບ |
|---|---|---|---|
| ເນີນງານທີ່ດີທີ່ສຸດ | ໜັບສະໜູນການເປີດເສລີການບໍລິການໃນອາຊຽນ | | |
| ***A2.5. ພິຈາລະນາການພັດທະນາພາກເອກະສານຊ້ອນທ້າຍ (Annex) ຂອງຂະແໜງການ*** | | | |
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 5) ສ້າງຂໍ້ດີ ແລະ ຂໍ້ເສັຍຂອງການມີເອກະສານຊ້ອນທ້າຍ (Annexes) ຫຼື ພາກ (Chapters) ໃນແຕ່ລະຂະແໜງການ<br>6) ຂະຫຍາຍເອກະສານຊ້ອນທ້າຍ ຫຼື ພາກ ຂອງສັນຍາ ATISA ຊຶ່ງລວມທັງຂະແໜງໂທລະຄົມ ແລະ ການສື່ສານ, ການບໍລິການດ້ານການເງິນ ແລະ ເອກະສານຊ້ອນທ້າຍ ຫຼື ພາກ ທີ່ໄດ້ຮັບການເຫັນດີ | 6. ຄົ້ນຄວ້າວ່າຈະບັນຈຸຮ່າງສັນຍາຂອງຂະແໜງການຕ່າງໆເຊັ່ນ ການເງິນ, ໂທລະຄົມ ແລະ ອື່ນໆ ເຂົ້າໃນ annexes ຫຼື chapters | ລທ | ສຳເລັດການບັນຈຸຮ່າງສັນຍາ |
| ***A2.6. ເສີມຂະຫຍາຍການພົວພັນຮ່ວມມືທາງດ້ານເຕັກນິກວິຊາການ ໃນຂະແໜງການບໍລິການເພື່ອການພັດທະນາຊັບພະຍາກອນມະນຸດ (HRD), ບັນດາກິດຈະກຳການສົ່ງເສີມຮ່ວມກັນເພື່ອດຶງດູດ FDI ໃນຂະແໜງການບໍລິການ ແລະ ແລກປ່ຽນການດຳເນີນງານທີ່ດີທີ່ສຸດ*** | | | |
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 7) ການມີສ່ວນຮ່ວມຢ່າງເປັນປົກກະຕິເພື່ອແລກປ່ຽນປະສົບການ ແລະ ວິທີການປະຕິບັດທີ່ດີທີ່ສຸດກັບບັນດາສະມາຄົມອຸດສາຫະກຳໃນຂະແໜງການບໍລິການຕ່າງໆ | 7. ປຶກສາຫາລື ແລະ ເຮັດວຽກຮ່ວມກັບໜ່ວຍງານ CCI ກ່ຽວກັບການສ້າງຕາຕະລາງຂໍ້ຜູກພັນໂດຍການນຳໃຊ້ຮູບແບບ Negative List Approach | ລທ | ຈັດກອງປະຊຸມປຶກສາຫາລືກັບໜ່ວຍງານ CCI ໃນການສ້າງ Negative List |
| 8) ປະຕິບັດກິດຈະກຳການຮ່ວມມືທາງດ້ານເຕັກນິກວິຊາການທີ່ເຫັນວ່າເໝາະສົມ ແລະ ໄດ້ຮັບການຕົກລົງເຫັນດີ | 8. ປຶກສາຫາລື ແລະ ເຮັດວຽກຮ່ວມກັບຂະແໜງການທີ່ກ່ຽວຂ້ອງເພື່ອດຳເນີນກິດຈະກຳຮ່ວມມືທາງດ້ານວິຊາການອື່ນໆຕາມຄວາມເໝາະສົມ | ລທ | ຈັດກອງປະຊຸມປຶກສາຫາລືກັບພາກສ່ວນກ່ຽວຂ້ອງ |

## C7. ຂະແໜງການຮັກສາສຸຂະພາບ

| *C7.2. ການປະສານກັນຢ່າງຕໍ່ເນື່ອງຂອງມາດຕະຖານ ແລະ ຄວາມສອດຄ່ອງໃນຜະລິດຕະພັນ ແລະ ການບໍລິການທາງການແພດເຊັ່ນ ເອກະສານທາງເຕັກນິກທົ່ວໄປທີ່ຈຳເປັນສຳລັບຂັ້ນຕອນການລົງທະບຽນ ແລະ ຕິດສະຫຼາກໂຄສະນາການ* | | | |
|---|---|---|---|
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 1) ພັດທະນາ ແລະ ເສີມສ້າງຫຼັກສູດການພະຍາບານຂອງແຕ່ລະປະເທດໂດຍຜ່ານແຜນຫຼັກສູດການພະຍາບານຂອງປະເທດສະມາຊິກອາຊຽນ | 1. ພັດທະນາຫຼັກສູດການຮຽນ-ການສອນຂອງແພດ, ທັນຕະແພດ ແລະ ພະຍາບານ | ກປປ | ສຳເລັດການພັດທະນາຫຼັກສູດ |
| 2) ຈັດຕັ້ງປະຕິບັດຄູ່ມືອາຊຽນກ່ຽວກັບຂໍ້ຮຽກຮ້ອງເອກະສານທາງດ້ານເຕັກນິກເພື່ອຂໍຈົດທະບຽນຢາ (ACTD/ACTR) | 2. ສ້າງຄວາມເຂົ້າໃຈກ່ຽວກັບລະບຽບການຮຽກຮ້ອງເອກະສານຂອງ ASEAN Common Technical Requirement (ACTR) ແລະ ແປລະບຽບການຕ່າງໆມາເປັນພາສາລາວ | ກອຢ | ຈັດເຜີຍແຜ່ໃຫ້ຜູ້ປະກອບການດ້ານການຢາ |
| 3) ການຈັດຕັ້ງປະຕິບັດສັນຍາການຮັບຮູ້ຊຶ່ງກັນ ແລະ ກັນຂອງບັນດາຂະແໜງການກ່ຽວກັບການກວດກາໂຮງງານຜະລິດຢາ (MRA on Good Manufacturing Practice (GMP) Inspection for Manufacturers of Medicinal Products) | 3. ສ້າງຄວາມເຂົ້າໃຈກ່ຽວກັບການຍົກລະດັບມາດຕະຖານໃຫ້ສອດຄ່ອງກັບລະບຽບການຂອງ MRA ທີ່ວາງອອກ | ກອຢ | ຈັດເຜີຍແຜ່ໃຫ້ຜູ້ປະກອບການດ້ານການຜະລິດຢາ |
| 4) ການຈັດຕັ້ງປະຕິບັດທິດນຳຂອງອາຊຽນກ່ຽວກັບການຄຸ້ມຄອງວຽກງານອຸປະກອນການແພດ ຫຼື ASEAN Medical Device Directive (AMDD) | 4. ປັບປຸງຂໍ້ຕົກລົງວ່າດ້ວຍການຂຶ້ນທະບຽນຢາ ສະບັບປີ 2003 | ກອຢ | ອອກຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຂຶ້ນທະບຽນຢາສະບັບປັບປຸງ |
| | 5. ສ້າງຂໍ້ຕົກລົງວ່າດ້ວຍການຈົດທະບຽນບາງລາຍການອຸປະກອນການແພດ | ກອຢ | ອອກຂໍ້ຕົກລົງວ່າດ້ວຍການຈົດທະບຽນບາງລາຍການອຸປະກອນການແພດ |
| *C7.4. ອຳນວຍຄວາມສະດວກການເຄື່ອນຍ້າຍຂອງຜູ້ປະກອບອາຊີບຮັກສາສຸຂະພາບໃນພາກພື້ນ* | | | |
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 5) ສ້າງ ແລະ ຈັດຕັ້ງປະຕິບັດເວັບໄຊການບໍລິການດ້ານການຮັກສາສຸຂະພາບ | 6. ສ້າງຖານຂໍ້ມູນພື້ນຖານສຳລັບຜູ້ປະກອບວິຊາຊີບປິ່ນປົວ | ກປປ | ສຳເລັດການສ້າງຖານຂໍ້ມູນ |
| 6) ເປີດການລົງທະບຽນຊົ່ວຄາວໃນປະເທດສະມາຊິກອາຊຽນທັງໝົດສຳລັບຜູ້ຊ່ຽວຊານທາງດ້ານການແພດອາຊຽນ ເພື່ອຈຸດປະສົງໃນ | 7. ສຳຫຼວດຈຳນວນທ່ານໝໍ, ທັນຕະແພດ ແລະ ພະຍາບານ/ພະດຸງຄັນທີ່ເປັນຄົນຕ່າງປະເທດ ທີ່ປະກອບວິຊາຊີບປິ່ນປົວຢູ່ ສປປ ລາວ | ກປປ | ບົດລາຍງານຜົນການສາຫຼວດ |
| | 8. ຄົ້ນຄວ້າພິຈາລະນາອອກໃບປະກອບວິຊາຊີບ | ກປປ | ອອກໃບປະກອບວິຊາຊີບ |

| | | | |
|---|---|---|---|
| ການປະຕິບັດຢ່າງຈຳກັດ, ການຝຶກອົບຮົມ, ການຄົ້ນຄວ້າ, ການຢ້ຽມຢາມຂອງຊ່ຽວຊານ ແລະ ຄວາມພະຍາຍາມທາງດ້ານມະນຸດສະທຳ | ປິ່ນປົວ ແລະ ຂຶ້ນທະບຽນໃຫ້ແກ່ຜູ້ປະກອບວິຊາຊີບປິ່ນປົວທີ່ກຳລັງປະຕິບັດໜ້າທີ່ໃນປະຈຸບັນແຕ່ຍັງບໍ່ທັນມີໃບປະກອບວິຊາຊີບປິ່ນປົວຕາມກົດໝາຍ | | ປິ່ນປົວ ແລະ ຂຶ້ນທະບຽນ |
| 7) ສຳຫຼວດບັນດາວິທີການເພື່ອຮັບປະກັນຄວາມປອດໄພ ແລະ ຄຸນນະພາບໃນການບໍລິການດ້ານການແພດ ໃນລະຫວ່າງການຝຶກອົບຮົມ, ການຄົ້ນຄວ້າ, ການຢ້ຽມຢາມຜູ້ຂອງຊ່ຽວຊານ, ຄວາມພະຍາຍາມທາງມະນຸດສະທຳ ແລະ ການປະຕິບັດຢ່າງຈຳກັດ | 9. ສ້າງນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງກັບການສອບເສັງລະດັບຊາດໃຫ້ແກ່ນັກສຶກສາສາຂາລະນະສຸກທີ່ຮຽນຈົບໃໝ່ | ກປປ | ມີນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງກັບວຽກງານດັ່ງກ່າວ |
| | 10. ຮ່າງຂໍ້ຕົກລົງວ່າດ້ວຍການຮັບປະກັນຄຸນນະພາບການສຶກສາສາທາລະນະສຸກ ແລະ ພັດທະນາອົງກອນຮັບຮອງຄຸນນະພາບ | ກປປ | ອອກຂໍ້ຕົກລົງວ່າດ້ວຍການຮັບປະກັນຄຸນນະພາບການສຶກສາສາທາລະນະສຸກແລະພັດທະນາອົງກອນຮັບຮອງຄຸນນະພາບ |
| | 11. ສ້າງນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງຂອງກັບການອອກໃບປະກອບວິຊາຊີບປິ່ນປົວປະເພດຕ່າງໆ ແລະ ການຂຶ້ນທະບຽນໃນ ສປປ ລາວ | ກປປ | ອອກນິຕິກຳລຸ່ມກົດໝາຍ |
| | 12. ສ້າງແຜນແມ່ບົດ (Blueprint) ສຳລັບຈັດການສອບເສັງລະດັບຊາດ | ກປປ | ສຳເລັດແຜນແມ່ບົດ (Blueprint) |
| *C7.5. ສົ່ງເສີມການພັດທະນາຂອບວຽກກົດລະບຽບຂອງອາຊຽນກ່ຽວກັບຢາພື້ນເມືອງ ແລະ ຜະລິດຕະພັນເສີມອາຫານສຸຂະພາບໂດຍການກຳນົດແນວທາງ ຫຼື ຂອບວຽກທີ່ເໝາະສົມ* <br> *C7.6. ສືບຕໍ່ພັດທະນາ ແລະ ອອກຄຳສັ່ງໃໝ່ກ່ຽວກັບຜະລິດຕະພັນຮັກສາສຸຂະພາບເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າຜະລິດຕະພັນຮັກສາສຸຂະພາບໃນພາກພື້ນ* | | | |
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 8) ສຳເລັດພັນທະກ່ຽວກັບລະບຽບການດ້ານຢາພື້ນເມືອງ ແລະ ຜະລິດຕະພັນອາຫານເສີມສຸຂະພາບ | 13. ແປ ແລະ ສ້າງຄວາມເຂົ້າໃຈກ່ຽວກັບບັນດາຄູ່ມື, ຫຼັກການການຂຶ້ນທະບຽນຢາພື້ນເມືອງ ແລະ ຜະລິດຕະພັນອາຫານເສີມສຸຂະພາບຂອງອາຊຽນ | ກອຢ | ຈັດເຜີຍແຜ່ |

## A3. ສະພາບແວດລ້ອມການລົງທຶນ

| *A3.1. ສ້າງວາລະຂອງສັນຍາດ້ານການລົງທຶນອາຊຽນ (ACIA) ໃຫ້ສຳເລັດສົມບູນ, ລວມທັງການຈັດຕັ້ງປະຕິບັດຢ່າງມີປະສິດທິພາບຂອງຮູບແບບໃນການລົບລ້າງ ຫຼື ການປັບປຸງບັນດາຂໍ້ຈຳກັດ ແລະ ອຸປະສັກດ້ານການລົງທຶນ<br>A3.2. ກຳນົດບັນດາແນວທາງ ຫຼື ກົນໄກທີ່ມີຄວາມເໝາະສົມຕໍ່ການຍົກເລີກ ແລະ/ຫຼື ການຫຼຸດຜ່ອນລາຍການບັນຊີສະຫງວນໃນ ACIA<br>A3.3. ສືບຕໍ່ດຳເນີນການ ແລະ ເສີມຂະຫຍາຍກົນໄກທົບທວນການດຳເນີນງານຂອງຄະນະກຳມະການປະສານງານດ້ານການລົງທຶນ (CCI)* | | | |
|---|---|---|---|
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 1) ທົບທວນ ແລະ ປະເມີນສະຖານະການການເປີດເສລີດ້ານການລົງທຶນອາຊຽນ (ໄລຍະເວລາ 3ປີ ນັບຈາກປີ 2017) | 1. ສ້າງຕັ້ງຫ້ອງການບໍລິການປະຕູດຽວຕາມທີ່ໄດ້ລະບຸໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປັບປຸງປີ 2016 | ລທ | ອຳນວຍຄວາມສະດວກ, ວ່ອງໄວໃຫ້ແກ່ນັກລົງທຶນ |
| 2) ເສີມຂະຫຍາຍຄວາມອາດສາມາດຂອງບັນດາປະເທດສະມາຊິກອາຊຽນໃນການສ້າງຕາຕະລາງບັນຊີສະຫງວນໄວ້ຢູ່ໃນສັນຍາການລົງທຶນ | 2. ທົບທວນຄືນການກຳນົດບັນຊີສະຫງວນໄວ້ຢູ່ໃນສັນຍາການລົງທຶນ | ລທ | ຮັບຮອງເອົາບັນຊີສະຫງວນໄວ້ |
| 3) ສືບຕໍ່ ແລະ ເສີມຂະຫຍາຍຂະບວນການທົບທວນຄືນສັນຍາການລົງທຶນໃນດ້ານການປັບປຸງນະໂຍບາຍການລົງທຶນ ແລະ ລະບຽບຫຼັກການໃຫ້ມີຄວາມໂປ່ງໃສ | 3. ທົບທວນຄືນນະໂຍບາຍການລົງທຶນຂອງ ສປປ ລາວ ຮ່ວມກັບອົງການ OECD | ລທ | ສຳເລັດບົດທົບທວນຄືນນະໂຍບາຍການລົງທຶນຂອງ ສປປ ລາວ |
| 4) ດຳເນີນການປຶກສາຫາລືດ້ານນະໂຍບາຍການອຳນວຍຄວາມສະດວກທາງດ້ານການລົງທຶນ ລວມທັງການແລກປ່ຽນຄວາມຮູ້ ແລະ ປະສົບການການດຳເນີນງານທີ່ດີທີ່ສຸດ | 4. ສ້າງຄວາມເຂົ້າໃຈກ່ຽວກັບກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບປັບປຸງປີ 2016 | ລທ | ຈັດເຜີຍແຜ່ໃຫ້ສູນກາງ ແລະ ທ້ອງຖິ່ນກ່ຽວກັບເນື້ອໃນກົດໝາຍ |
| 5) ພັດທະນາ ແລະ ປັບປຸງແຫຼ່ງຄວາມຮູ້ກ່ຽວກັບການສົ່ງເສີມການລົງທຶນ | 5. ຈັດພິມເອກະສານທີ່ກ່ຽວຂ້ອງກັບການລົງທຶນ ເຊັ່ນ ແຜ່ນພັບ, ປຶ້ມຄູ່ມືການບໍລິການປະຕູດຽວ | ລທ | ມີຄູ່ມື ແລະ ເອກະສານໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ |
| *A3.4. ສືບຕໍ່ດຳເນີນການສົ່ງເສີມຮ່ວມກັນຂອງສັນຍາການລົງທຶນຮອບດ້ານອາຊຽນ (ACIA) ໃນຖານະເປັນຈຸດໝາຍປາຍທາງດ້ານການລົງທຶນ* | | | |
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 6) ສືບຕໍ່ເຮັດໃຫ້ສັນຍາການລົງທຶນຮອບດ້ານອາຊຽນ (ACIA) ໃຫ້ມີຄວາມແທດເໝາະໃນສະພາບການຂອງສັງຄົມ | 6. ສ້າງຄວາມເຂົ້າໃຈກ່ຽວກັບສັນຍາການລົງທຶນຮອບດ້ານອາຊຽນ ໃຫ້ແກ່ພາກລັດ ແລະ ພາກເອກະຊົນ | ລທ | ຈັດເຜີຍແຜ່ |
| 7) ບຳລຸງຮັກສາ ແລະ ເສີມຂະຫຍາຍປະຕູຂໍ້ມູນຂ່າວສານຂອງພາກພື້ນ (ໂດຍສະເພາະເວັບໄຊດ້ານການ | 7. ປັບປຸງຖານຂໍ້ມູນການລົງທຶນຢູ່ໃນເວັບໄຊການລົງທຶນຂອງ ສປປ ລາວ www.investlaos.gov.la ແລະ | ລທ | ອັບເດດຖານຂໍ້ມູນການລົງທຶນ |

| | | | |
|---|---|---|---|
| ລົງທຶນອາຊຽນ) | www.erm.gov.la ເພື່ອໃຫ້ທັນກັບສະພາບການ | | |
| 8) ພັດທະນາ ແລະ ປັບປຸງແຫຼ່ງຄວາມຮູ້ກ່ຽວກັບການສົ່ງເສີມການລົງທຶນ | 8. ຍົກລະດັບຂີດຄວາມສາມາດດ້ານການສົ່ງເສີມການລົງທຶນໃຫ້ແກ່ພະນັກງານວິຊາການທີ່ຮັບຜິດຊອບກ່ຽວກັບຂະແໜງການລົງທຶນທັງສູນກາງ ແລະ ທ້ອງຖິ່ນ | ລທ | ຈັດຝຶກອົບຮົມກ່ຽວກັບການສົ່ງເສີມ ແລະ ດຶງດູດການລົງທຶນໃຫ້ແກ່ພະນັກງານຜູ້ຮັບຜິດຊອບຕົວຈິງ |

## A4. ການເຊື່ອມໂຍງທາງດ້ານການເງິນ, ການເຂົ້າເຖິງການບໍລິການທາງດ້ານການເງິນ ແລະ ສະຖຽນລະພາບທາງດ້ານການເງິນ

| *4.1. ສ້າງຄວາມເຂັ້ມແຂງໃຫ້ແກ່ການເຊື່ອມໂຍງທາງດ້ານການເງິນ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າ ແລະ ການລົງທຶນພາຍໃນອາຊຽນ ໂດຍການຍົກບົດບາດຂອງທະນາຄານທ້ອງຖິ່ນອາຊຽນໃຫ້ຫຼາຍຂຶ້ນ, ມີການເຊື່ອມໂຍງຕະຫຼາດປະກັນໄພຫຼາຍຂຶ້ນ ແລະ ມີການເຊື່ອມໂຍງຕະຫຼາດທຶນໃຫ້ຫຼາຍຂຶ້ນ* | | | |
|---|---|---|---|
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 1) ການເປີດເສລີການບໍລິການທາງດ້ານການເງິນເທື່ອລະກ້າວພາຍໃຕ້ຂອບສັນຍາການບໍລິການອາຊຽນ (AFAS)/ສັນຍາການຄ້າດ້ານການບໍລິການອາຊຽນ (ATISA) | 1. ປັບປຸງບາງນິຕິກຳໃນຂະແໜງການທະນາຄານ ເພື່ອໃຫ້ມີຄວາມຊັດເຈນຄົບຖ້ວນຂຶ້ນຕື່ມຄື: ບັນດານິຕິກຳລຸ່ມກົດໝາຍ ທີ່ກ່ຽວຂ້ອງກ່ຽວກັບການບໍລິການດ້ານການເງິນ | ທຫລ | ມີລະບຽບການກ່ຽວກັບສິນເຊື່ອ, ຂໍ້ຕົກລົງວ່າດ້ວຍການໃຫ້ບໍລິການຜະລິດຕະພັນຂອງທະນາຄານທຸລະກິດ |
| | 2. ຈັດກອງປະຊຸມປຶກສາຫາລືພາຍໃນກັບບັນດາພາກສ່ວນກ່ຽວຂ້ອງ ເຊັ່ນ: ບັນດາກົມກອງພາຍໃນ ທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນເອກະຊົນ ເພື່ອໃຫ້ມີຄວາມເຂົ້າໃຈແຈ້ງ ແລະ ກະກຽມຄວາມພ້ອມ | ທຫລ | ສຳເລັດການຈັດກອງປະຊຸມປຶກສາຫາລື |
| | 3. ເສີມສ້າງຄວາມອາດສາມາດທາງດ້ານການເຈລະຈາການເປີດເສລີການບໍລິການທາງດ້ານການເງິນອາຊຽນ | ກງ/ທຫລ | ຈັດຝຶກອົບຮົມ |
| | 4. ຍື່ນຄຳຮ້ອງ ແລະ ການສະເໜີຂໍເປີດຕະຫຼາດການບໍລິການທາງດ້ານການເງິນ ສຳລັບຂໍ້ຜູກພັນທາງດ້ານການເງິນອາຊຽນຮອບທີ 8 | ກງ/ທຫລ | ສຳເລັດນຳສົ່ງແລ້ວ |
| 2) ການເປີດເສລີ ແລະ ການເຊື່ອມໂຍງຕະຫຼາດປະກັນໄພອາຊຽນບາງສ່ວນ | 5. ເສີມສ້າງຄວາມອາດສາມາດໃຫ້ແກ່ບຸກຄະລາກອນ ເພື່ອສ້າງຄວາມເຂັ້ມແຂງທາງດ້ານການຄຸ້ມຄອງຂະແໜງການປະກັນໄພ | ກງ | ຈັດຝຶກອົບຮົມໃຫ້ພະນັກງານວິຊາການ |
| | 6. ກະກຽມຄວາມພ້ອມໃຫ້ແກ່ການເປີດເສລີຂະແໜງການປະກັນໄພ | ກງ | ຈັດກອງປະຊຸມປຶກສາຫາລືພາຍໃນ |
| 3) ສົ່ງເສີມການເຊື່ອມໂຍງຕະຫຼາດທຶນອາຊຽນເພື່ອສົ່ງ ເສີມກິດຈະກຳຂ້າມແດນຫຼາຍຂຶ້ນ: ສົ່ງເສີມການເຊື່ອມໂຍງລະບົບຊື້-ຂາຍສຳລັບຕະຫຼາດຫຼັກຊັບອາຊຽນ, ກຳນົດໃຫ້ມີຕົວອ້າງອີງສຳລັບໄລຍະເວລາຫຼັງການຊື້-ຂາຍຮຸ້ນປົກກະຕິ (ຕົວອ້າງອີງສຳລັບການກຳນົດອາຍຸພັນທະບັດ), ມີການກຳນົດລາຄາພັນທະບັດຫຼັງການຂາຍ, ຮັບຮອງເອົາມາດຕະຖານເປີດເຜີຍຂໍ້ມູນກ່ຽວກັບການອອກຫຼັກຊັບປະເພດໜີ້, ໃຫ້ມີຜະລິດຕະພັນຫຼັກຊັບທີ່ຫຼາກຫຼາຍເພື່ອສະພາບຄ່ອງຂອງທະນາຄານ | 7. ຄົ້ນຄວ້າຂັ້ນຕອນ ແລະ ເງື່ອນໄຂ ເພື່ອກະກຽມຄວາມພ້ອມຮອບດ້ານໃນການເຂົ້າຮ່ວມພາຄີຂອງ ASEAN Disclosure Standard for Debt Securities | ທຫລ | ບົດສະເໜີຂັ້ນເທິງເພື່ອພິຈາລະນາເຂົ້າເປັນພາຄີຂອງ ASEAN Disclosure Standard for Debt Securities |

| | | | |
|---|---|---|---|
| 4) ສົ່ງເສີມການເຂົ້າເຖິງຕະຫຼາດເພື່ອເຂົ້າຫາແຫຼ່ງທຶນພາຍໃຕ້ຂອບກອງທຶນຮ່ວມອາຊຽນ | 8. ແຕ່ງຕັ້ງຄະນະຮັບຜິດຊອບພາຍໃນສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ໃນການຄົ້ນຄວ້າກ່ຽວກັບ ກອງທຶນຮ່ວມ ແລະ ສະຖາບັນສື່ກາງດ້ານຫຼັກຊັບທີ່ກ່ຽວຂ້ອງ | ທຫລ | ສຳເລັດການສ້າງຕັ້ງຄະນະຮັບຜິດຊອບ |
| | 9. ຄົ້ນຄວ້າ ແລະ ຮ່າງຂໍ້ຕົກລົງວ່າດ້ວຍການສ້າງຕັ້ງກອງທຶນຮ່ວມ (ສະບັບເບື້ອງຕົ້ນ) | ທຫລ | ສຳເລັດການສ້າງຂໍ້ຕົກລົງ |
| | 10. ສຶກສາ ແລະ ຄົ້ນຄວ້າການສ້າງຕັ້ງກອງທຶນຮ່ວມ ແລະ ຮ່າງລະບຽບການກ່ຽວຂ້ອງ | ທຫລ | ສຳເລັດການສ້າງຕັ້ງກອງທຶນຮ່ວມ |
| | 11. ເສີມສ້າງຄວາມອາດສາມາດຂອງພະນັກງານ ສຄຄຊ ເປັນຕົ້ນແມ່ນການເຂົ້າຮ່ວມສຳມະນາ, ຝຶກອົບຮົມ, ການໄປຝຶກງານຕົວຈິງຢູ່ປະເທດອ້ອມຂ້າງ ກ່ຽວກັບຂັ້ນຕອນໃນການກະກຽມສ້າງຕັ້ງກອງທຶນຮ່ວມ ແລະ ສະຖາບັນສື່ກາງດ້ານຫຼັກຊັບທີ່ກ່ຽວຂ້ອງ | ທຫລ | ຈັດຝຶກອົບຮົມ |
| ***A4.2. ສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນ ເພື່ອສະໜອງສິນຄ້າ ແລະ ການບໍລິການທາງດ້ານການເງິນໃຫ້ກວ້າງອອກໂດຍສະເພາະໃຫ້ແກ່ບຸກຄົນທີ່ເຂົ້າເຖິງຍາກເຊັ່ນ ວິສາຫະກິດຂະໜາດຈຸລະພາກ, ນ້ອຍ ແລະ ກາງ (MSMEs)*** | | | |
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 5) ຈັດຕັ້ງປະຕິບັດການເຜີຍແຜ່ຄວາມຮູ້ສຳລັບຂະແໜງການປະກັນໄພ | 12. ສົ່ງເສີມຄວາມເຂົ້າໃຈກ່ຽວກັບປະກັນໄພ | ກງ | ຈັດຝຶກອົບຮົມ |
| | 13. ສ້າງຄວາມເຂົ້າໃຈກ່ຽວກັບລະບຽບການໃໝ່ ຫຼື ລະບຽບການທີ່ຕິດພັນກັບປະກັນໄພ ໂດຍຜ່ານສື່, ເວັບໄຊຕ່າງໆ | ກງ | ຈັດຝຶກອົບຮົມ |
| 6) ອະນຸຍາດໃຫ້ຜູ້ລົງທຶນລາຍຍ່ອຍສາມາດຊື້ພັນທະບັດລັດຖະບານ | 14. ຄົ້ນຄວ້າຮ່າງດຳລັດວ່າດ້ວຍພັນທະບັດລັດຖະບານ | ກງ | ສຳເລັດຮ່າງດຳລັດ |
| 7) ອຳນວຍຄວາມສະດວກໃຫ້ຜູ້ລົງທຶນລາຍຍ່ອຍສາມາດຊື້ພັນທະບັດເອກະຊົນ | | | |
| 8) ສົ່ງເສີມການມີປະສິດທິຜົນ, ນະວັດຕະກຳ ແລະ ການນຳໃຊ້ສະກຸນເງິນພາກພື້ນ | 15. ປັບປຸງໂຄງປະກອບການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ ໂດຍການສ້າງຕັ້ງກົມຄຸ້ມຄອງລະບົບຊຳລະ | ທຫລ | ສຳເລັດການສ້າງຕັ້ງກົມຄຸ້ມຄອງລະບົບຊຳລະ |
| | 16. ສ້າງ ແລະ ປັບປຸງບັນດານິຕິກຳເພື່ອຄຸ້ມຄອງ, ຕິດຕາມກວດກາ, ອຳນວຍຄວາມສະດວກ ແລະ ສົ່ງເສີມການນຳໃຊ້ນະວັດຕະກຳ ແລະ ເຕັກໂນໂລຊີເຂົ້າໃນການບໍລິການທາງການເງິນ | ທຫລ | ສຳເລັດຮ່າງຂໍ້ຕົກລົງວ່າດ້ວຍການບໍລິການທາງດ້ານການເງິນຜ່ານໂທລະສັບມືຖື |
| 9) ສ້າງຄວາມອາດສາມາດພາຍໃນທາງດ້ານ ລະບົບຊຳລະລາຍຍ່ອຍໃນເວລາຕົວຈິງ | 17. ເສີມສ້າງຄວາມອາດສາມາດທາງດ້ານລະບົບການຊຳລະລາຍຍ່ອຍໃຫ້ແກ່ພະນັກງານ ທຫລ ໂດຍສະເພາະກົມເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ດ້ວຍຮູບການສົ່ງໄປຝຶກອົບຮົມ, ສຳມະນາ ແລະ ອື່ນໆ ຢູ່ພາຍໃນ ແລະ ຕ່າງປະເທດ | ທຫລ | ຈັດຝຶກອົບຮົມ |
| | 18. ທົດສອບລະບົບຊຳລະມູນຄ່າຍ່ອຍຂ້າມທະນາຄານເພື່ອວິເຄາະຄວາມອາດສາມາດໃນການໃຫ້ບໍລິການລະບົບດັ່ງກ່າວ | ທຫລ | ບົດປະເມີນຜົນການທົດສອບລະບົບຊຳລະ |

| | | | |
|---|---|---|---|
| 10) ສ້າງແຜນຍຸດທະສາດທາງດ້ານການເຂົ້າເຖິງການບໍລິການດ້ານການເງິນ | 19. ຮ່າງແຜນຍຸດທະສາດທາງດ້ານການເຂົ້າເຖິງການບໍລິການດ້ານການເງິນສໍາລັບ ສປປ ລາວ. | ທຫລ | ສໍາເລັດຮ່າງແຜນຍຸດທະສາດ |
| 11) ສົ່ງເສີມນະວັດຕະກໍາການເຂົ້າເຖິງການບໍລິການທາງດ້ານການເງິນຜ່ານລະບົບດີຈິຕອລ | 20. ປັບປຸງບາງນິຕິກໍາໃນຂະແໜງການທະນາຄານເພື່ອໃຫ້ມີຄວາມຊັດເຈນຄົບຖ້ວນຂຶ້ນຕື່ມ:<br>- ກົດໝາຍວ່າດ້ວຍທະນາຄານທຸລະກິດ<br>- ບັນດານິຕິກໍາລຸ່ມກົດໝາຍ ທີ່ກ່ຽວຂ້ອງກ່ຽວກັບການບໍລິການດ້ານການເງິນ<br>ໃນແຜນຍຸດທະສາດການເຂົ້າເຖິງການບໍລິການທາງດ້ານການເງິນສໍາລັບ ສປປ ລາວ ໄດ້ກໍານົດເອົາບູລິມະສິດຂອງການຊໍາລະສະສາງດ້ວຍການສ້າງລະບຽບການ ແລະ ນະໂຍບາຍ, ໂຄງລ່າງພື້ນຖານ ແລະ ການເງິນຜ່ານມືຖືເປັນແຜນກິດຈະກໍາເພື່ອສ້າງແວດລ້ອມຂອງການເຂົ້າເຖິງການຊໍາລະສະສາງໃຫ້ໄດ້ດີກວ່າເກົ່າ. ຈັດຕັ້ງປະຕິບັດໂຄງການທົດລອງການບໍລິການທາງບໍລິການທາງດ້ານການເງິນຜ່ານໂທລະສັບມືຖືໂດຍອະນຸຍາດໃຫ້ທະນາຄານການຄ້າຕ່າງປະເທດລາວມະຫາຊົນ ດໍາເນີນການທົດລອງໃຫ້ໃສ່ຊື່ໂຄງການ "ເງິນດ່ວນ ຊຸມຊົນ, BCOME" ແລະ ກໍາລັງກະກຽມໂຄງການທົດລອງ ຜ່ານໂທລະສັບມືຖື ໂດຍອະນຸຍາດໃຫ້ບໍລິສັດ Unitel ເປັນຜູ້ດໍາເນີນການ | ທຫລ | ສໍາເລັດຮ່າງເບື້ອງຕົ້ນຂໍ້ຕົກລົງວ່າດ້ວຍການບໍລິການທາງດ້ານການເງິນ |
| 12) ເພີ່ມການສ້າງຄວາມອາດສາມາດໃຫ້ແກ່ສະມາຊິກອາຊຽນ ໃນການສົ່ງເສີມລະບົບເສດຖະກິດເພື່ອຊຸກຍູ້ການເຂົ້າເຖິງບໍລິການທາງການເງິນ (financial inclusion ecosystem) | 21. ສ້າງໂຄງການເພື່ອຂໍການຊ່ວຍເຫຼືອຈາກປະເທດອາຊຽນເກົ່າ ແລະ ອົງການຈັດຕັ້ງສາກົນຕ່າງໆເພື່ອຍົກລະດັບພະນັກງານທີ່ຮັບຜິດຊອບວຽກດັ່ງກ່າວ | ທຫລ | ສໍາເລັດການສ້າງແຜນເພື່ອຂໍການຊ່ວຍເຫຼືອ |
| ***A4.3. ຮັບປະກັນສະຖຽນລະພາບທາງດ້ານການເງິນຜ່ານການສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ໂຄງລ່າງພື້ນຖານໃນພາກພື້ນ ໂດຍສະເພາະໃນຊ່ວງໄລຍະພາກພື້ນມີຄວາມເຄັ່ງຕຶງ*** | | | |
| **ແຜນກິດຈະກໍາລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 13) ສົ່ງເສີມການຄຸ້ມຄອງທີ່ໂປ່ງໃສ, ມີມາດຕະຖານ ແລະ ສອດຄ່ອງ | 22. ປັບປຸງລະບົບການຄຸ້ມຄອງພາຍໃນທະນາຄານແຫ່ງ ສປປ ລາວ | ທຫລ | ບົດລາຍງານ |
| 14) ສືບຕໍ່ເຜີຍແຜ່ມາດຕະການປົກປ້ອງທາງດ້ານການເງິນ | 23. ສ້າງຄວາມເຂົ້າໃຈກ່ຽວກັບມາດຕະການປົກປ້ອງທາງດ້ານການເງິນ ໃຫ້ແກ່ກົມກ່ຽວຂ້ອງພາຍໃນທະນາຄານແຫ່ງ ສປປ ລາວ ພ້ອມທັງບັນດາທະນາຄານທຸລະກິດໃຫ້ມີຄວາມຮູ້ ແລະ ເຂົ້າໃຈຫຼາຍຂຶ້ນ | ທຫລ | ຈັດກອງປະຊຸມເຜີຍແຜ່ |
| 15) ສ້າງນະໂຍບາຍກົນໄກການປ້ອງກັນໃນການເປີດເສລີ ບັນຊີທຶນ | 24. ສົ່ງບົດລາຍງານນະໂຍບາຍກົນໄກການປ້ອງກັນໃນການເປີດເສລີບັນຊີທຶນ (CAL policy | ທຫລ | ສໍາເລັດບົດລາຍງານ |

| | | | |
|---|---|---|---|
| | dialogue reports) ໃຫ້ກັບຄະນະ WC-CAL ຢ່າງເປັນປະຈໍາ | | |
| 16) ປັບປຸງນະໂຍບາຍສໍາລັບກົນໄກການປ້ອງກັນໃນການເປີດເສລີບັນຊີທຶນ ເພື່ອສຸມໃສ່ມາດຕະການປົກປ້ອງທີ່ຕິດພັນກັບສະຖຽນລະພາບທາງດ້ານເງິນຕາ ແລະ ການເງິນ | 25. ຄົ້ນຄວ້ານະໂຍບາຍພາຍໃນສໍາລັບກົນໄກການປ້ອງກັນໃນການເປີດເສລີບັນຊີທຶນ ເພື່ອສຸມໃສ່ມາດຕະການປົກປ້ອງທີ່ຕິດພັນກັບສະຖຽນລະພາບທາງດ້ານເງິນຕາ ແລະ ການເງິນ | ທຫລ | ຈັດກອງປະຊຸມປຶກສາຫາລືພາຍໃນ |
| 17) ພັດທະນາຖານຂໍ້ມູນທີ່ປອດໄພສໍາລັບບົດລາຍງານກ່ຽວກັບສະຖິຕິການເຄື່ອນຍ້າຍທຶນ ແລະ ມາດຕະການການເຄື່ອນຍ້າຍທຶນ | 26. ສ້າງຖານຂໍ້ມູນທີ່ປອດໄພສໍາລັບບົດລາຍງານກ່ຽວກັບສະຖິຕິການເຄື່ອນຍ້າຍທຶນ ແລະ ມາດຕະການການເຄື່ອນຍ້າຍທຶນ | ທຫລ | ສໍາເລັດການສ້າງຖານຂໍ້ມູນ |
| ***A4.4. ສົ່ງເສີມການເປີດເສລີບັນຊີທຶນເພື່ອສົ່ງເສີມການເຄື່ອນຍ້າຍທຶນໃນປະເທດສະມາຊິກອາຊຽນ ເພື່ອອໍານວຍຄວາມສະດວກແກ່ການລົງທຶນ ແລະ ການປ່ອຍກູ້ຂ້າມແດນໃນພາກພື້ນ*** | | | |
| **ແຜນກິດຈະກໍາລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 18) ປັບປຸງຕາຕະລາງການເປີດເສລີບັນຊີທຶນໃຫ້ເປັນເຄື່ອງມືໃນການປະເມີນ | 27. ຄົ້ນຄວ້າ ແລະ ປັບປຸງຕາຕະລາງການເປີດເສລີບັນຊີທຶນ ພ້ອມທັງລະບຸຂໍ້ຈໍາກັດໃສ່ໃນຕາຕະລາງ ໂດຍໃຫ້ສອດຄ່ອງກັບລະບຽບການພາຍໃນ | ທຫລ | ສໍາເລັດຮ່າງຕາຕະລາງການເປີດເສລີບັນຊີທຶນ |
| 19) ສືບຕໍ່ຄວາມພະຍາຍາມໃນການເປີດເສລີບັນຊີທຶນ | 28. ສ້າງຄວາມເຂົ້າໃຈກ່ຽວກັບວຽກງານການເປີດເສລີບັນຊີທຶນ ເພື່ອຄົ້ນຄວ້າຄວາມເປັນໄປໄດ້ໃນການເປີດເສລີບັນຊີທຶນຂອງ ສປປ ລາວ | ທຫລ | ຈັດກອງປະຊຸມປຶກສາຫາລືທີມງານການເປີດເສລີບັນຊີທຶນພາຍໃນທະນາຄານແຫ່ງ ສປປ ລາວ |
| ***A4.5. ລະບົບຊໍາລະສະສາງອາຊຽນຈະຖືກປັບປຸງໃນຕໍ່ໜ້າໃນບາງຂົງເຂດເຊັ່ນ ສົ່ງເສີມມາດຕະຖານ ແລະ ພັດທະນາໂຄງລ່າງການສະສາງການຄ້າຂ້າມແດນ, ການໂອນເງິນກັບຄືນປະເທດ, ການຊໍາລະລາຍຍ່ອຍ ແລະ ຕະຫຼາດທຶນ*** | | | |
| **ແຜນກິດຈະກໍາລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 20) ສ້າງ ແລະ/ຫຼື ສ້າງຄວາມເຂັ້ມແຂງທາງດ້ານການປະສານງານໃນພາກພື້ນ ເພື່ອປະເມີນ ແລະ ປຶກສາຫາລືກ່ຽວກັບເຄື່ອງມື ແລະ ເຕັກນິກທີ່ເໝາະສົມເພື່ອໃຊ້ ສໍາລັບການປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງທາງດ້ານຄວາມປອດໄພທາງດ້ານອີເລັກໂຕຼນິກທີ່ຕິດພັນກັບພື້ນຖານໂຄງລ່າງຂອງຕະຫຼາດການເງິນ (ລະບົບຊໍາລະສະສາງ) | 29. ປັບປຸງໂຄງປະກອບການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ ໂດຍການສ້າງຕັ້ງກົມຄຸ້ມຄອງລະບົບຊໍາລະ | ທຫລ | ສໍາເລັດການສ້າງຕັ້ງກົມຄຸ້ມຄອງລະບົບຊໍາລະ |
| | 30. ສ້າງ ແລະ ປັບປຸງບັນດານິຕິກໍາເພື່ອຄຸ້ມຄອງ, ຕິດຕາມກວດກາ ແລະ ໃຫ້ບໍລິການລະບົບ ດັ່ງກ່າວເຊັ່ນ ຂໍ້ຕົກລົງວ່າດ້ວຍການບໍລິຫານຄວາມສ່ຽງທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ | ທຫລ | ມີລະບຽບການວ່າດ້ວຍການບໍລິການທາງດ້ານການເງິນແບບດິຈິຕອນ |

| | | | |
|---|---|---|---|
| 21) ຮັບຮອງມາດຕະຖານສາກົນ (ຕົວຢ່າງ: ISO 20022) ເພື່ອກະກຽມຄວາມພ້ອມໃຫ້ແກ່ການເຊື່ອມໂຍງລະບົບການຊໍາລະສະສາງພາຍໃນກັບອາຊຽນໃນຮູບແບບສອງຝ່າຍ/ຫຼາຍຝ່າຍ | 31. ປັບປຸງໂຄງປະກອບການຈັດຕັ້ງຂອງທະນາຄານແຫ່ງ ສປປ ລາວ ໂດຍການສ້າງຕັ້ງກົມຄຸ້ມຄອງລະບົບຊໍາລະ | ທຫລ | ສໍາເລັດການສ້າງຕັ້ງກົມຄຸມຄອງລະບົບຊໍາລະ |
| ***A4.6. ການເສີມສ້າງຄວາມອາດສາມາດຈະຊ່ວຍໃຫ້ຊ່ອງວ່າງໃນການພັດທະນາທາງດ້ານການເງິນໃນພາກພື້ນແຄບລົງ. ເປົ້າໝາຍດັ່ງກ່າວສາມາດບັນລຸໄດ້ໂດຍຜ່ານການຈັດໂຄງການຮຽນຮູ້ ແລະ ແລກປ່ຽນບົດຮຽນ ແລະ ປະສົບການ, ແລະ ການປະຕິບັດຜ່ານມາໃນຂົງເຂດທີ່ຕິດພັນກັບການເຊື່ອມໂຍງ ແລະ ພັດທະນາຂະແໜງການເງິນ ເຊັ່ນ ການຄຸ້ມຄອງ ແລະ ຕິດຕາມທາງດ້ານການເງິນ, ການເຂົ້າເຖິງການບໍລິການທາງດ້ານການເງິນ ແລະ ລະບົບຊໍາລະສະສາງ*** | | | |
| **ແຜນກິດຈະກໍາລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 22) ຈັດໂຄງການຮຽນຮູ້ ແລະ ແລກປ່ຽນຄວາມຮູ້ ແລະ ປະສົບການ, ການປະຕິບັດຜ່ານມາໃນຂົງເຂດທີ່ຕິດພັນກັບການເຊື່ອມໂຍງ ແລະ ການພັດທະນາຂະແໜງການເງິນເຊັ່ນ ການຄຸ້ມຄອງ ແລະ ການຕິດຕາມທາງດ້ານການເງິນ, ການເຂົ້າເຖິງການບໍລິການທາງດ້ານການເງິນ ແລະ ລະບົບຊໍາລະສະສາງ | 32. ເສີມສ້າງຄວາມອາດສາມາດໃຫ້ພະນັກງານທະນາຄານແຫ່ງ ສປປ ລາວ ໂດຍຜ່ານການຮ່ວມມືຫຼາຍຊ່ອງທາງເຊັ່ນ ຂອບການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ | ທຫລ | ຈັດຝຶກອົບຮົມ |

## D1. ເສີມສ້າງບົດບາດຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs)

| ແຜນກິດຈະກຳລວມຂອງອາຊຽນ | ແຜນວຽກຂອງ ສປປ ລາວ | ໜ່ວຍງານຮັບຜິດຊອບຫຼັກ | ຄາດຄະເນຜົນໄດ້ຮັບ |
|---|---|---|---|
| *D1.1. ສົ່ງເສີມການຜະລິດ, ເຕັກໂນໂລຊີ ແລະ ນະວັດຕະກຳໂດຍຜ່ານບັນດາມາດຕະການເພື່ອຊຸກຍູ້ສົ່ງເສີມການຜະລິດຂອງ MSMEs ໂດຍການສ້າງຄວາມເຂົ້າໃຈກັບທ່າອ່ຽງຫຼັກໃນການສ້າງກຸ່ມການຜະລິດອຸດສາຫະກຳ ຜ່ານການເຊື່ອມໂຍງອຸດສາຫະກຳ, ສົ່ງເສີມເຕັກໂນໂລຊີ ແລະ ສ້າງຂີດຄວາມສາມມາດເພື່ອສົ່ງເສີມກຸ່ມອຸດສາຫະກຳ ເຊັ່ນດຽວກັນກັບການສົ່ງເສີມຄວາມຄິດສ້າງສັນທີ່ເປັນປະໂຫຍດເພື່ອໃຫ້ເປັນຂໍ້ໄດ້ປຽບໃນການແຂ່ງຂັນທີ່ສຳຄັນ ໂດຍຜ່ານການນຳໃຊ້ເຕັກໂນໂລຊີ ແລະ ການປະຍຸກໃຊ້ໃນການເຊື່ອມໂຍງກັບທຸລະກິດ ແລະ ສະຖາບັນການສຶກສາ* | | | |
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 1) ດຳເນີນການສຶກສາກ່ຽວກັບການເພີ່ມປະສິດທິພາບການຜະລິດ ແລະ ຈັດການປຶກສາຫາລືລະຫວ່າງພາກລັດ-ເອກະຊົນ ແລະ ກອງປະຊຸມໂຕະມົນຂອງພາກສ່ວນກ່ຽວຂ້ອງອື່ນໆ | 1. ເສີມສ້າງການເຂົ້າຫາລະບົບສຳລັບການຢັ້ງຢືນຄຸນນະພາບ ແລະ ມາດຕະຖານ | ກສອ | ເຜີຍແຜ່ກ່ຽວກັບເງື່ອນໄຂ ແລະ ຄວາມສຳຄັນ ຂອງບັນດາໃບຢັ້ງຢືນຄຸນນພາບ ແລະ ມາດຕະຖານ |
| | 2. ສ້າງຄວາມຮັບຮູ້ກ່ຽວກັບຄຸນນະພາບ ແລະ ການຜະລິດ | ກສອ | ຈັດເຜີຍແຜ່ໃຫ້ແກ່ພາກສ່ວນກ່ຽວຂ້ອງ |
| 2) ສ້າງແຮງຈູງໃຈໃຫ້ແກ່ລາງວັນນະວັດຕະກຳໃໝ່ ແລະ ຖານຄວາມຮູ້ທີ່ສ້າງສັນ ແລະ ອຸດສາຫະກຳສີຂຽວ (ປະຕິບັດໃນລະດັບຊາດ) | 3. ສຶກສາຄວາມເປັນໄປໄດ້ໃນການລິເລີ່ມຈັດຕັ້ງປະຕິບັດໂຄງການດັ່ງກ່າວ ໂດຍໃນເບື້ອງຕົ້ນຈະເປັນການສ້າງບັນດາຄູ່ມືພິຈາລະນາຜູ້ຈະໄດ້ຮັບລາງວັນ SME ດີເດັ່ນ | ກສອ | ຈັດກອງປະຊຸມປຶກສາຫາລືເພື່ອກະກຽມ concept note ໃນການຈັດຕັ້ງປະຕິບັດ |
| 3) ພັດທະນາແຜນການສ້າງຄວາມອາດສາມາດການສ້າງຄວາມຮັບຮູ້ກ່ຽວກັບສິດໃນຊັບສິນທາງປັນຍາ ແລະ ການຄ້າສຳລັບ SMEs (ປະຕິບັດໃນລະດັບຊາດ) | 4. ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ SMEs ໃນການລົງທະບຽນທາງດ້ານຊັບສິນທາງປັນຍາ | ກຊປ | ໂຄສະນາ ແລະ ເຜີຍແຜ່ໃຫ້ແກ່ SMEs ກ່ຽວກັບວຽກງານຊັບສິນທາງປັນຍາ |
| 4) ພັດທະນາຮູບແບບການເຮັດວຽກຮ່ວມກັນແບບອອນລາຍສຳລັບເຄືອຂ່າຍການເຮັດທຸລະກິດຮ່ວມກັນຂອງອາຊຽນ ຫຼື ASEAN business incubation network (ABINet) ເພື່ອແລກປ່ຽນແນວຄວາມຄິດ ແລະ ຂໍ້ມູນຊຶ່ງກັນ ແລະ ກັນ | 5. ສົ່ງເສີມການປຶກສາຫາລື ແລະ ສະໜອງການຝຶກອົບຮົມເພື່ອຍົກລະດັບຄຸນນະພາບການບໍລິຫານງານຂອງ MSMEs | ກສອ | ວນກ ສາມາດປັບປຸງການບໍລິຫານທຸລະກິດ ໃຫ້ມີໝາກຜົນດີຂຶ້ນ |
| *D1.2. ເພີ່ມທະວີການເຂົ້າຫາແຫຼ່ງທຶນໂດຍການພັດທະນາ ແລະ ຊຸກຍູ້ສົ່ງເສີມຂອບການດຳເນີນງານຂອງອົງກອນທີ່ພົວພັນເຖິງການປັບປຸງຄວາມເຂົ້າໃຈ ແລະ ການເສີມສ້າງໂຄງສ້າງພື້ນຖານທາງການເງິນແບບດັ້ງເດີມ ພ້ອມທັງສິ່ງແວດລ້ອມທາງດ້ານນະໂຍບາຍ ແລະ ບັນດາມາດຕະການຊຶ່ງເປັນການສົ່ງເສີມທາງເລືອກ ແລະ ການສະໜອງເງິນທຶນທີ່ບໍ່ແມ່ນແບບດັ້ງເດີມທີ່ສົ່ງເສີມການຮວມຕົວ, ຄວາມຮູ້ທາງການເງິນ ແລະ ຄວາມສາມາດຂອງ MSMEs ເພື່ອໃຫ້ມີສ່ວນຮ່ວມດີຍິ່ງຂຶ້ນໃນລະບົບການເງິນ, ສົ່ງເສີມພາສີອາກອນ ແລະ ບັນດາແຜນການສ້າງແຮງຈູງໃຈອື່ນໆ* | | | |
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 5) ຈັດກອງປະຊຸມໂຕະມົນເພື່ອປຶກສາຫາລືລະຫວ່າງ SMEs, ໜ່ວຍງານກຳກັບດູແລ ແລະ ສະຖາບັນການເງິນ ເພື່ອແລກປ່ຽນກັນກ່ຽວກັບບັນຫາໃນການເຂົ້າເຖິງແຫຼ່ງທຶນເຊັ່ນ ການຈັດອັນດັບ | 6. ສ້າງຄວາມອາດສາມາດໃນການເຂົ້າເຖິງແຫຼ່ງທຶນສຳລັບ MSMEs | ກສອ | ຈຳນວນ SMEs ເຂົ້າເຖິງແຫລ່ງທຶນໄດ້ຫລາຍກວ່າທຽບໃສ່ປີຜ່ານມາ |
| | 7. ຍົກລະດັບກອງທຶນສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນສະຖາບັນການເງິນສະເພາະກິດສຳລັບວິສາຫະກິດຂະ | ກສອ | ສຳເລັດການຍົກລະດັບຈາກກອງທຶນໃຫ້ກາຍເປັນສະຖາບັນການເງິນ |

| | | | |
|---|---|---|---|
| ສິນເຊື່ອ, ການໃຫ້ຄະແນນສິນເຊື່ອ, ສຳນັກງານສິນເຊື່ອ, ກົດໝາຍວ່າດ້ວຍການຄ້ຳປະກັນການເຮັດທຸລະກຳ, ການເງິນຈູລະພາກ, SMEs ທີ່ເນັ້ນໃສ່ການປ່ອຍກູ້, ບໍລິສັດສິນເຊື່ອລະຫວ່າງປະເທດ (ບັນຊີຕ້ອງຮັບ, ໜັງສືສັນຍາໃຊ້ໜີ້, ສິນເຊື່ອບັນຊີລູກໜີ້, ແຜນການປັບປຸງໂຄງສ້າງໜີ້ຂະໜາດນ້ອຍ) ແລະ ອື່ນໆ | ໜາດນ້ອຍ ແລະ ກາງ | | |
| | 8. ປັບປຸງຄວາມອາດສາມາດຂອງພາກລັດໃນການອຳນວຍຄວາມສະດວກການເຂົ້າເຖິງແຫຼ່ງທຶນຂອງ MSMEs | ກສວ | ຈັດຝຶກອົບຮົມກ່ຽວກັບການປັບປຸງແຜນທຸລະກິດ ເພື່ອນຳໃຊ້ເຂົ້າໃນການກູ້ຢືມເງິນ |
| 6) ພັດທະນາທາງເລືອກດ້ານນະໂຍບາຍໃນການປະສານງານກັບຂະແໜງການກ່ຽວຂ້ອງເພື່ອປັບປຸງຮູບແບບທາງການເງິນເຊັ່ນ ໂຄງການຄ້ຳປະກັນສິນເຊື່ອ ແລະ ການເງິນເພື່ອການຄ້າ | 9. ສ້າງຄວາມອາດສາມາດໃຫ້ແກ່ ທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດຕ່າງໆ ໃນການພັດທະນາຜະລິດຕະພັນທາງດ້ານການເງິນສຳລັບ MSMEs | ກສວ | ຝຶກອົບຮົມໃຫ້ແກ່ບັນດາທະນາຄານທຸລະກິດ ເພື່ອສ້າງຄວາມເຂົ້າໃຈກ່ຽວກັບບັນດາຜະລິດຕະພັນທາງດ້ານການເງິນໃໝ່ |
| 7) ສ້າງຄວາມອາດສາມາດໃຫ້ແກ່ SMEs, ໜ່ວຍງານກຳກັບດູແລ ແລະ ສະຖາບັນການເງິນ ທັງພາກລັດ ແລະ ເອກະຊົນໃນການກວດສອບສິນເຊື່ອຂອງ SMEs (ການປະເມີນສິນເຊື່ອ,ສິນເຊື່ອລະຫວ່າງປະເທດ ແລະ ອື່ນໆ) ພ້ອມທັງການສ້າງຕັ້ງລະບົບຄຸ້ມຄອງເພື່ອຈັດຕັ້ງປະຕິບັດເງິນກູ້ພິເສດ (preferential loans) ພ້ອມກັບການຄ້ຳປະກັນສິນເຊື່ອ (ປະຕິບັດໃນລະດັບຊາດ) | 10. ສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງ MSMEs ໂດຍຜ່ານ:<br>▪ ທະນາຄານທີ່ເຂົ້າຮ່ວມໂຄງການທີ່ມີຄ່າທຳນຽມຕ່ຳ | ກສວ | ສະໜອງຂໍ້ມູນກ່ຽວກັບທະນາຄານທີ່ເຂົ້າຮ່ວມໂຄງການ ເພື່ອໃຫ້ SMEs ສາມາດເຂົ້າເຖິງແຫລ່ງທຶນ ໄດ້ງ່າຍ ແລະ ຫລາຍຂຶ້ນ |
| 8) ສຶກສາກ່ຽວກັບທາງເລືອກດ້ານນະໂຍບາຍ ແລະ ການດຳເນີນງານທີ່ດີໃນການຈັດຫາເງິນທຶນ ແລະ ທາງເລືອກດ້ານການເງິນສຳລັບ SMEs ແລະ start-ups ແລະ ການຈັດກອງປະຊຸມໂຕະມົນເພື່ອປຶກສາຫາລືຮ່ວມກັບຜູ້ທີ່ມີສ່ວນຮ່ວມຈາກພາກສ່ວນຕ່າງໆໂດຍການປະສານງານກັບຂະແໜງການກ່ຽວຂ້ອງ | 11. ພັດທະນາສ້າງຕັ້ງ ແລະ ປະກອບທຶນສຳລັບ Start-up (Angel Fund) | ກສວ | ຈັດກອງປະຊຸມປຶກສາຫາລືລະຫວ່າງພາກລັດ ແລະ ພາກເອກະຊົນເພື່ອສ້າງຮ່າງ concept note ສຳລັບການສ້າງຕັ້ງ Angel Fund |
| | 12. ສ້າງຄວາມຮັບຮູ້ໃຫ້ແກ່ພາກສ່ວນກ່ຽວຂ້ອງພາຍໃຕ້ຫົວຂໍ້ "ທາງເລືອກສຳລັບຂະແໜງການອຸດສາຫະກຳ ແລະ ການຄ້າ"" | ກອຫ | ຈັດກອງປະຊຸມເຜີຍແຜ່ບົດຄົ້ນຄວ້າຂອງ ERIA ພາຍໃຕ້ຫົວຂໍ້ດັ່ງກ່າວ |
| 9) ແລກປ່ຽນປະສົບການໃນການດຳເນີນງານທີ່ດີເພື່ອອຳນວຍຄວາມສະດວກການຮັບຮອງກົດລະບຽບບັນຊີ, ແນວທາງ ແລະ ແຜນງານສຳລັບ MSMEs | 13. ຈັດກອງປະຊຸມປຶກສາຫາລືການສ້າງລະບົບບັນຊີເອກະພາບນຳໃຊ້ສະເພາະກັບ MSMEs | ກສວ | ເປີດກອງປະຊຸມປຶກສາຫາລືກ່ຽວກັບລະບົບບັນຊີດັ່ງກ່າວ |
| | 14. ສຳເລັດການພັດທະນາແນວຄວາມຄິດເບື້ອງຕົ້ນກ່ຽວກັບລະບົບບັນຊີເອກະພາບ ນຳໃຊ້ສະເພາະກັບ MSMEs | ກສວ | ຈັດກອງປະຊຸມປຶກສາຫາລືເພື່ອສຶກສາຄວາມເປັນໄປໄດ້ ແລະ ສ້າງຮ່າງ concept note |

| | | | |
|---|---|---|---|
| 10) ສ້າງຮູບແບບການເຮັດວຽກຮ່ວມກັນແບບອອນລາຍກ່ຽວກັບລຳດັບການສະໜັບສະໜູນທາງການເງິນໃຫ້ແກ່ MSMEs ເພື່ອຫຼຸດຜ່ອນຊ່ອງວ່າງທາງຂໍ້ມູນ (ສູນບໍລິການ SME ອາຊຽນ) | 15. ສ້າງ ແລະ ພັດທະນາລະບົບດາ Framework ແລະ TOR ສຳລັບສູນບໍລິການ MSMEs | ກສວ | ສິ່ງຂໍ້ມູນເຂົ້າລະບົບຂອງສູນບໍລິການດັ່ງກ່າວ |
| ***D1.3. ຊຸກຍູ້ສົ່ງເສີມການເຂົ້າເຖິງຕະຫຼາດ ແລະ ການເປັນກົນໄກສາກົນໂດຍການຜັນຂະຫຍາຍ ແລະ ພັດທະນາແຜນງານສະໜັບສະໜູນສຳລັບການເຂົ້າເຖິງຕະຫຼາດ ແລະ ການເຊື່ອມໂຍງເຂົ້າໃນຕ່ອງໂສ້ການສະໜອງຂອງສາກົນ ລວມທັງການສົ່ງເສີມການຮ່ວມມືກັບບັນດາບໍລິສັດຂ້າມຊາດ (MNCs) ແລະ ບັນດາວິສາຫະກິດຂະໜາດໃຫຍ່ເພື່ອເພີ່ມທະວີການເຂົ້າເຖິງຕະຫຼາດ ແລະ ກາລະໂອກາດໃນການສົ່ງເສີມການນຳໃຊ້ບັນດາມາດຕະການຊຸກຍູ້ການຄ້າທາງເອເລັກໂຕຣນິກເພື່ອສົ່ງເສີມການສົ່ງອອກໂດຍຜ່ານບັນດາກົນໄກຕ່າງໆເຊັ່ນ: ຄຣີນິກການສົ່ງອອກ, ການບໍລິການໃຫ້ຄຳປຶກສາ ແລະ ການນຳໃຊ້ ROO*** | | | |
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 11) ສົ່ງເສີມແລະ ເພີ່ມທະວີການເຜີຍແຜ່ກ່ຽວກັບຜົນປະໂຫຍດຂອງປະຊາຄົມເສດຖະກິດອາຊຽນຕໍ່ SMEs | 16. ສົ່ງເສີມຕ່ອງໂສ້ມູນຄ່າເພີ່ມການຜະລິດໃນຂະແໜງການທີ່ເປັນທ່າແຮງ | ກສວ | ສະໜອງການຝຶກອົບຮົມກ່ຽວກັບຫົວຂໍ້ດັ່ງກ່າວ ໃຫ້ແກ່ບັນດາພາກສ່ວນກ່ຽວຂ້ອງ |
| 12) ການຊຸກຍູ້ສົ່ງເສີມຂໍ້ມູນຂ່າວສານກ່ຽວກັບຕະຫຼາດ, ສັນຍາການຄ້າເສລີ ແລະ ບັນດາຄູ່ຮ່ວມທຸລະກິດທີ່ມີທ່າແຮງ (ສູນບໍລິການ SME ອາຊຽນ) | 17. ອຳນວຍຄວາມສະດວກໃຫ້ແກ່ MSMEs ເພື່ອເຂົ້າເຖິງຕະຫຼາດພາກພື້ນ ແລະ ສາກົນ | ກສຄ | ສົ່ງເສີມໃຫ້ເຂົ້າຮ່ວມງານວາງສະແດງພາຍໃນ ແລະ ຕ່າງປະເທດ |
| 13) ອຳນວຍຄວາມສະດວກໃນການສ້າງເຄືອຂ່າຍ ແລະ ການເປັນຫຸ້ນສ່ວນລະຫວ່າງ SMEs ແລະ ບໍລິສັດໃຫຍ່ | 18. ສົ່ງເສີມການສ້າງເຄືອຂ່າຍ ລະຫວ່າງ SME ກັບ SME ແລະ ວິສາຫະກິດຂະໜາດໃຫຍ່ ກັບ SME | ກສຄ | ຈັດງານວາງສະແດງ ແລະ ຈັບຄູ່ທຸລະກິດ |
| 14) ສົ່ງເສີມການພັດທະນາ ແລະ ການນຳໃຊ້ຮູບແບບການຄ້າທາງເອເລັກໂຕຣນິກເພື່ອຊຸກຍູ້ການຂະຫຍາຍຕົວຂອງ SMEs | 19. ເປີດໂຕເວັບໄຊ E-commerce www.plaosme.com ພາຍໃນເດືອນ ກໍລະກົດ 2017 ພາຍໃຕ້ໂຄງການ ADB (ກົມການນຳເຂົ້າ ແລະ ສົ່ງອອກ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ກົມສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ) | ກຂອ | ສຳເລັດການເປີດນຳໃຊ້ເວັບໄຊດັ່ງກ່າວ |
| | 20. ຂົນຂວາຍ ແລະ ສົ່ງເສີມ SME ມານຳໃຊ້ເວັບໄຊດັ່ງກ່າວ | ສຄອ | ໂຄສະນາເພື່ອສົ່ງເສີມ SMEs ເພື່ອນຳໃຊ້ເວັບໄຊດັ່ງກ່າວ |
| 15) ແລກປ່ຽນບັນດາຍຸດທະສາດຕ່າງໆທີ່ເປັນແບບຢ່າງສຳລັບ SMEs ເພື່ອເຊື່ອມໂຍງເຂົ້າສູ່ຕ່ອງໂສ້ການສະໜອງຂອງໂລກ ລວມທັງອຸດສາຫະກຳທີ່ຕົ້ນຕໍ ແລະ ໂອກາດຂອງ SMEs ໃນການສ້າງມູນຄ່າເພີ່ມ | 21. ກຳນົດ MSMEs ຂອງລາວ ທີ່ມີທ່າແຮງ ແລະ ມີຄວາມສາມາດໃນການແຂ່ງຂັນ. | ກສວ | ສຶກສາຄວາມເປັນໄປໄດ້ຂອງ SMEs ຕາມຂະແໜງການ |
| ***D1.4. ຊຸກຍູ້ສົ່ງເສີມນະໂຍບາຍ MSMEs ແລະ ສະພາບແວດລ້ອມດ້ານການຄຸ້ມຄອງ ຊຶ່ງເປັນການສົ່ງເສີມການຮ່ວມມື ແລະ ກົນໄກປະສານງານພາຍໃນ ແລະ ລະຫວ່າງລັດຖະບານ, ການມີສ່ວນຮ່ວມຂອງ MSMEs ໃນຂັ້ນຕອນການຕັດສິນໃຈເພື່ອສາມາດເປັນຕົວແທນທາງດ້ານສິດຜົນປະໂຫຍດໃຫ້ແກ່ MSMEs ໄດ້ດີກວ່າ, ໃຫ້ການສະໜັບສະໜູນແກ່ບັນດາວິສາຫະກິດຈຸລະພາກໃນຂະແໜງການນອກລະບົບ ແລະ*** | | | |

| ຂະບວນການປັບປຸງການເຊື່ອມໂຍງຂອງບັນດາວິສາຫະກິດດັ່ງກ່າວ ທີ່ມີສ່ວນຮ່ວມໃນການຂໍໃບອະນຸຍາດຕ່າງໆ ແລະ ການຈົດທະບຽນທຸລະກິດເພື່ອໃຫ້ມີຕົ້ນທຶນຄ່າໃຊ້ຈ່າຍທີ່ໜ້ອຍ ແລະ ສົ່ງເສີມທຸລະກິດໃນລະບົບໃຫ້ຫຼາຍຂຶ້ນ | | | |
|---|---|---|---|
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານ ຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 16) ສ້າງຕັ້ງກົນໄກການປະສານງານລະດັບສູງລະຫວ່າງໜ່ວຍງານຮັບຜິດຊອບຕ່າງໆສຳລັບ MSMEs | 22. ສືບຕໍ່ຈັດຕັ້ງປະຕິບັດ ແລະ ປະສານງານກັບບັນດາກະຊວງ ແລະ ອົງການທີ່ກ່ຽວຂ້ອງກັບວຽກງານສົ່ງເສີມ SME ໂດຍອີງຕາມການກຳນົດລາຍລະອຽດໃນແຜນພັດທະນາ SME 2016-2020 ຂອງ ສປປ ລາວ | ກສວ | ສຳເລັດການຮັບຮອງແຜນພັດທະນາ SMEs 2016-2020 |
| 17) ພັດທະນາສະຖິຕິທີ່ສາມາດສົມທຽບໄດ້ຂອງ MSMEs ໂດຍຜ່ານການສຳຫຼວດທຸລະກິດປະຈຳປີ | 23. ສ້າງ Software ເກັບກຳຂໍ້ມູນສະຖິຕິອຸດສາຫະກຳທົ່ວປະເທດ | ກສວ | ມີລະບົບເກັບກຳຂໍ້ມູນ |
| | 24. ປັບປຸງລະບົບການຂຶ້ນທະບຽນວິສາຫະກິດທົ່ວປະເທດ | ກສວ | ສຳເລັດການປັບປຸງລະບົບຂຶ້ນທະບຽນວິສາຫະກິດ |
| 18) ສ້າງຄວາມອາດສາມາດໃຫ້ແກ່ຜູ້ກຳນົດນະໂຍບາຍ ເພື່ອການຮ່ວມມືແລະ ການປະສານງານຢ່າງມີປະສິດທິພາບຮ່ວມກັນທັງພາຍໃນ ແລະ ລະຫວ່າງລັດຖະບານ ກ່ຽວກັບນະໂນຍາຍ, ກົດລະບຽບ ແລະ ການຄຸ້ມຄອງທີ່ດີ (ປະຕິບັດໃນລະດັບຊາດ) | 25. ສືບຕໍ່ຈັດຕັ້ງປະຕິບັດປະເມີນນິຕິກຳທີ່ກະທົບຕໍ່ການດຳເນີນທຸລະກິດຂອງ SME ໂດຍຜ່ານການປະເມີນນິຕິກຳທີ່ກ່ຽວຂ້ອງ, ຝຶກອົບຮົມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ລັດຖະກອນທີ່ຮັບຜິດຊອບກົດໝາຍຢູ່ແຕ່ລະກະຊວງ | ພະແນກກົດໝາຍ, ຫ້ອງການກະຊວງ ອຄ | ບົດລາຍງານການປະເມີນ |

| D1.5. ສົ່ງເສີມການເປັນຜູ້ປະກອບການ ແລະ ການພັດທະນາທຶນທີ່ເປັນຊັບພະຍາກອນມະນຸດໂດຍຜ່ານການສ້າງສະພາບແວດລ້ອມທີ່ເອື້ອອຳນວຍຫຼາຍຂຶ້ນສຳລັບການເປັນຜູ້ປະກອບການ ໂດຍຜ່ານລະບົບການສຶກສາແບບອອນລາຍຂອງອາຊຽນ, ຊຸກຍູ້ສົ່ງເສີມຕົ້ນທຶນທີ່ເປັນມະນຸດຂອງ MSMEs ໂດຍສະເພາະແມ່ນຜູ້ປະກອບການໄວໜຸ່ມ ແລະ ເພດຍິງ | | | |
|---|---|---|---|
| **ແຜນກິດຈະກຳລວມຂອງອາຊຽນ** | **ແຜນວຽກຂອງ ສປປ ລາວ** | **ໜ່ວຍງານ ຮັບຜິດຊອບຫຼັກ** | **ຄາດຄະເນຜົນໄດ້ຮັບ** |
| 19) ພັດທະນາ ແລະ ບຳລຸງຮັກສາສະຖາບັນການສຶກສາອອນລາຍສຳລັບ SME ຂອງອາຊຽນ | 26. ສົ່ງເສີມໃຫ້ SME ຫຼື ພາກການສຶກສາເຂົ້າໃຊ້ລະບົບ “ASEAN online SME Academy” ຜ່ານການເຜີຍແຜ່ຕາມກອງປະຊຸມຕ່າງໆ | ກສວ | ເຜີຍແຜ່ ແລະ ຊຸກຍູ້ໃຫ້ SMEs ສະໝັກເປັນສະມາຊິກ ແລະ ຮຽນຮູ້ຜ່ານເວັບໄຊ້ດັ່ງກ່າວ |
| 20) ສ້າງຕັ້ງໂຄງການຝຶກງານ/ໂຄງການຫຼັງການສຶກສາ ໃນການເປັນນັກທຸລະກິດ ແລະ ຜູ້ປະກອບການຂອງອາຊຽນ | 27. ຊຸກຍູ້ວິສາຫະກິດຂະໜາດໃຫຍ່ເປີດໂອກາດຮັບເອົາ SME ໄປຝຶກງານເພື່ອເພີ່ມທັກສະທາງດ້ານບໍລິຫານ ແລະ ດ້ານເຕັກນິກສະເພາະ | ກສວ | ຈັດກອງປະຊຸມປຶກສາຫາລືເພື່ອສຶກສາຄວາມເປັນໄປໄດ້ ແລະ ຮ່າງ concept note ໃນການສ້າງຕັ້ງໂຄງການຝຶກງານ |
| 21) ສ້າງຕັ້ງສູນຝຶກອົບຮົມວິຊາຊີບ ແລະ ໃຫ້ຄຳປຶກສາສຳລັບຈຸນລະວິສາຫະກິດ, ນັກທຸລະກິດຍິງ ແລະ ໄວໜຸ່ມໃນການປະສານງານກັບພາກເອກະຊົນ (ເສີມສ້າງຈຸນລະວິສາຫະກິດ) | 28. ສົ່ງເສີມ ການນຳໃຊ້ບໍລິການຂອງ SME Service Center | ກສວ +ສຄອ | ນຳໃຊ້ຮູບແບບການໂຄສະນາເພື່ອສົ່ງເສີມການໃຊ້ບໍລິການສູນດັ່ງກ່າວ |
| | 29. ສ້າງກິດຈະກຳຮ່ວມກັບບັນດາ Co-working space ເພື່ອກໍ່ສ້າງຜູ້ປະກອບກິດຈະການໃໝ່ ເຊັ່ນ: Start-up Weekend, ການແຂ່ງຂັນແຜນທຸລະກິດ | ກສວ+ສຄອ | ຈຳນວນຜູ້ເຂົ້າຮ່ວມງານມີແນວຄິດໃນການລິເລີ່ມທຸລະກິດແບບໃໝ່ ແລະ ທັນສະໄໝ |
| 22) ການສົ່ງເສີມ ແລະ ການຮວມຕົວ | 30. ສົ່ງເສີມການຮວມຕົວຂອງຜູ້ປະກອບການຍິງ | ກສຄ | ສົ່ງຜູ້ປະກອບກິດຈະການຍິງ |

| | | | |
|---|---|---|---|
| ຂອງຜູ້ປະກອບການຍິງອາຊຽນ | ລະຫວ່າງຜູ້ປະກອບການພາຍໃນ ແລະ ຕ່າງປະເທດ | | ເຂົ້າຮ່ວມກອງປະຊຸມຕ່າງໆ ຕາມການເຊື້ອເຊີນ |
| | 31. ສົ່ງເສີມກິດຈະກຳຕ່າງໆທີ່ຕິດພັນກັບການດຳເນີນທຸລະກິດຂອງເພດຍິງ | ກສຄ | ຈັດເທດສະການອາຫານລາວ, ວາງສະແດງຫັດຖະກຳ, ... |
| 23) ການສົ່ງເສີມນັກທຸລະກິດຍິງ ໂດຍຜ່ານການສ້າງຄວາມອາດສາມາດ, ການເຂົ້າເຖິງຕະຫຼາດ, ການສ້າງຍີ່ຫໍ້ສິນຄ້າ ແລະ ການຫຸ້ມຫໍ່ | 32. ສ້າງຄວາມອາດສາມາດໃຫ້ແກ່ນັກທຸລະກິດຍິງ | ກສຄ | ເຊື້ອເຊີນຜູ້ປະກອບກິດຈະການຍິງເຂົ້າຮ່ວມຝຶກອົບຮົມຕາມການຈັດຂຶ້ນແຕ່ລະໄລຍະ |

## IV. ກົນໄກການລາຍງານ ແລະ ການປະເມີນຜົນ

ກອງປະຊຸມຕິດຕາມການຈັດຕັ້ງປະຕິບັດແຜນວຽກຂອງ ສປປ ລາວ ສໍາລັບປີ 2017 ເພື່ອຈັດຕັ້ງປະຕິບັດແຜນງານປະຊາຄົມເສດຖະກິດອາຊຽນ 2025 ຈະຈັດຂຶ້ນໃນທຸກໆ 6 ເດືອນ ເພື່ອຮັບຟັງການລາຍງານຄວາມຄືບໜ້າ ແລະ ຂໍ້ສະດວກ/ຂໍ້ຫຍຸ້ງຍາກ ຈາກຂະແໜງການຕ່າງໆໃນການຈັດຕັ້ງປະຕິບັດແຜນວຽກດັ່ງກ່າວ ແລະ ພ້ອມທັງປຶກສາຫາລືກັນເພື່ອເຮັດສໍາເລັດການຈັດຕັ້ງປະຕິບັດແຜນວຽກຕາມເວລາທີ່ກໍານົດໄວ້.

ແຜນວຽກຂອງ ສປປ ລາວ ສໍາລັບປີ 2017 ໃນການຈັດຕັ້ງປະຕິບັດແຜນງານປະຊາຄົມເສດຖະກິດອາຊຽນ 2025 ຈະໄດ້ຮັບການປະເມີນຄືນໃນທ້າຍປີ 2017 ເພື່ອຕີລາຄາຜົນໄດ້ຮັບຂອງການຈັດຕັ້ງປະຕິບັດແຜນວຽກດັ່ງກ່າວ ພ້ອມທັງລາຍງານຕໍ່ລັດຖະມົນຕີເສດຖະກິດອາຊຽນຂອງ ສປປ ລາວ ແລະ ຈະໄດ້ສືບຕໍ່ສ້າງແຜນວຽກຈັດຕັ້ງປະຕິບັດໃນປີຕໍ່ໆໄປ.